ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ

ແຂວງຫວງພະບາງ, ວັນທີ 16/2/2015

ບົດລາຍງານ
ການສຳຫລວດຈັດສັນແຫຼ່ງທ່ອງທ່ຽວ
ອຸທິຍານນ້ຳຕົກຕາດກວາງຊີ ໃນລະຫວ່າງວັນທີ 13-16/2/2015

I. ພາກສະເໜີ

ອີງຕາມແຜນຍຸດທະສາດພັດທະນາການທ່ອງທ່ຽວ 2012–2020 ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ອີງຕາມບັນຊີແຫຼ່ງທ່ອງທ່ຽວບູລິມະສິດຂອງແຂວງຫຼວງພະບາງ ແລະ ແຫຼ່ງທ່ອງທ່ຽວບູລິມະສິດຂອງທ້ອງຖິ່ນ ສຳລັບແຕ່ນີ້ຫາປີ 2020. ອີງຕາມສະພາບຄວາມຕ້ອງການຂອງວຽກງານການພັດທະນາແຫຼ່ງທ່ອງທ່ຽວ, ການຈັດສັນແຫຼ່ງທ່ອງທ່ຽວເປັນວຽກງານບູລິມະສິດຂອງຂະແໜງການທ່ອງທ່ຽວ. ເພື່ອການກຳນົດເຂດແຫຼ່ງທ່ອງທ່ຽວໃນ ແຕ່ລະແຫ່ງໃນທ້ອງຖິ່ນໃຫ້ ເປັນລະບົບ, ເພື່ອເປັນພື້ນຖານໃຫ້ການລົງທຶນພັດທະນາ, ຊ່ວຍອະນຸ ລັກຮັກສາຊັບພະຍາກອນການທ່ອງທ່ຽວໃຫ້ມີຄວາມຍືນຍົງ.

ໂຄງການຈັດສັນແຫຼ່ງທ່ອງທ່ຽວໄດ້ເລີ່ ມຈັດຕັ້ງປະຕິບັດມາຕັ້ງແຕ່ສົກປີ 2009-2010 ໂດຍແມ່ນ ອົງການທ່ອງທ່ຽວແຫ່ງຊາດ, ຊຶ່ງແມ່ນກົມແຜນການ ແລະ ການຮ່ວມມືໃນເມື່ອກ່ອນ ເປັນຜູ້ຮັບຜິດຊອບ ໂດຍກົງ ໂດຍການປະສານງານກັບບັນດາແຂວງໃນທ້ອງຖິ່ນເພື່ອຈັດສັນແຫຼ່ງທ່ອ ງທ່ຽວ. ໃນເບື້ອງຕົ້ນ ທີມງານຂັ້ນສູນກາງໄດ້ນຳພາ ບັນດາແຂວງໃນທ້ອງຖິ່ນ ຈັດຕັ້ງປະຕິບັດໂຄງການຈັດສັນແຫຼ່ງທ່ອງທ່ຽວ ແຂວງລະ 1 ແຫ່ງ ເພື່ອເປັນຕົວແບບ ແນໃສ່ໃຫ້ວິຊາການແຕ່ລະແຂວງສາມາດສືບຕໍ່ຈັດຕັ້ງປະຕິບັດດ້ວຍ ຕົວເອງ.

ໂດຍອີງຕາມແຜນພັດທະນາເສດຖະກິດ-ສັງຄົມສຳລັບປີ 2010-2015 ຂອງແຂວງຫວງພະບາງ ແລະ ເມືອງຫວງພະບາງ ໄດ້ຖືເອົາວຽກງານການທ່ອງທ່ຽວເປັນບູລິມະສິດ ອັນດັບໜຶ່ງ ແລະ ດ່ຽວນີ້ນ, ພະແນກ ຖວທ ແຂວງຫຼວງພະບາງ ຈຶ່ງ ໄດ້ນຳສະເໜີຕໍ່ກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫຼ ງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມາສົມທົບ ເພື່ອ ສຳຫຼວດຈັດສັນແຫຼ່ງທ່ອງທ່ຽວອຸທິຍານນ້ຳຕົກ ຕາດກວາງຊີ ເມືອງເມືອງຫວງພະບາງ ໃນຄັ້ງນີ້.

ກ່ອນການລົງສຳຫຼວດພື້ນທີ່ ໄດ້ຈັດກອງ ປະຊຸມປຶກສາຫາລື ແນະນຳວິທີການສຳຫຼວດ ແລະ ຈັດ ສັນ ໃຫ້ແກ່ຜູ້ເຂົ້າຮ່ວມ; ທີມງານຈາກສູນກາງ, ທີມງານຈາກພະແນກ ຖວທ ແຂວງຫຼວງພະບາງ , ບ້ນດາ້ຫອງການນ້ຂ້ນເມືອງຫຼວງພະບາງ ທ່ີມ່ສ່ວນ່ກ່ຽວ້ຂ້ອງ ແລະ ບ້ານທ່າແປ້ນ ຊ່ຶງມ່ຜ້ເ້ຂ່ົາຮ່ວມ ທ້ງ ໝ ົດ ຈ ານວ ນ 34 ທ ່ານ ລ ายละ ອ ยดเ ม ิ ເ ອ ກ ะ ส า ນ ข ้ อ ม ้ ท ้ า ย ย ั ด ด ิ ต ด ้ พ ่ อ ม . ใ ນ ก อ ง ป ะ ช ุ ม ค ั ้ ง น ี ้ ท ่ า ນ ນ า ง พ ອ ນ ม ะ ล ิ ອ ິ ນ ท ะ พ ົ ม , ຮ ອ ງ ຫ ົ ວ ໜ ້ າ ກ ົ ມ ພ ັ ດ ท ะ ນ า ก า ร ท ่ อ ง ท ่ ຽ ว , ก ะ ช ວ ง ถ ะ ແ ຫ ຼ ง ข ่ า ว , ວ ັ ດ ท ะ ນ ะ ท ำ ແ ລ ะ ท ่ อ ง ท ่ ຽ ว ໄ ด ้ ส ะ ເ ໜ ີ ต ่ ໍ ท ี ่ ป ะ ช ุ ม ໂ ด ย ห ย ้ ก ่ ຽ ว ก ั บ ค ว า ม เ ป ็ น ม า ข อ ง ว ຽ ก ง า ก า ร จัดสันแຫຼ່ງທ່ອງທ່ຽວ, ຈຸດປະສົງຂອງການຈັດສັນແຫຼ່ງທ່ອງທ່ຽວ ແລະ ໄດ້ແນະນຳຈັດແບ່ງໜ້າວຽກ ໃຫ້ຜູ້ເຂົ້າຮ່ວມແຕ່ລະທ່ານຢ່າງຈະແຈ້ງ. ຈຸດປະສົງຕົ້ນຕໍຂອງການລົງສຳຫຼວດ ໃນຄັ້ງນີ້ແມ່ນເພື່ອ:

- ກຳນົດເຂດໃນບໍລິເວນແຫຼ່ງທ່ອງທ່ຽວ ອຸທິຍານນ້ຳຕົກຕາດກວ້າງຊີ ແລະ ຈັດສັນແຕ່ລະເຂດ ໃຫ້ເປັນລະບົບ, ເຊັ່ນ: ເຂດອະນຸລັກ, ເຂດສະຫງວນ ແລະ ເຂດບໍລິການ.
- ກຳນົດກິດຈະກຳເພີ່ມເຕີມ ໃນບໍລິເວນແຫຼ່ງທ່ອງທ່ຽວ ພ້ອມທັງກຳນົດທິດທາງໃນການພັດທະ ນາໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກພາຍໃນແຫຼ່ງທ່ອງທ່ຽວ.

ຂໍ້ມູນດ້ານຕ່າງໆໃນບົດລາຍງານສະບັບນີ້ ຈຳນວນຫນຶ່ງແມ່ນໄດ້ມາຈາກການສຳຫຼວດ, ການ ເກັບກຳຂໍ້ມູນ, ການວັດແທກເນື້ອທີ່ຕົວຈິງ, ການປຶກສາຫາລື ແລະ ສຳພາດກັບອຳນາດການປົກຄອງ ເມືອງ ແລະ ແຂວງ ແລະ ປະຊາຊົນບ້ານທ່າແປ້ນ ຊຶ່ງແມ່ນບ້ານທີ່ຕິດກັບແຫຼ່ງທ່ອງທ່ຽວ. ນອກຈາກນີ້, ຂໍ້ມູນສ່ວນໜ່ຶງ ກໍໄດ້ມາຈາກຜົນຂອງການສຳຫຼວດ ແລະ ວິໄຈ ໃນໄລຍະທີ່ຜ່ານມາ.

ບົດລາຍງານສະບັບນີ້ປະກອບມີ 4 ພາກໃຫຍ່ຄື:

- ພາກທີ I: ພາກສະເໜີ
- ພາກທີ II: ສະພາບທ່ົວໄປຂອງແຫຼ່ງທ່ອງທ່ຽວ
- ພາກທີ III: ການວິເຄາະຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍ (SWOT Analysis)
- ພາກທີ IV: ແນວຄວາມຄິດໃນການພັດທະນາແຫຼ່ງທ່ອງທ່ຽວ ອຸທິຍານນ້ຳຕົກຕາດກວ້າງຊີ.

ຄະນະຮັບຜິດຊອບການສຳຫຼວດຈັດສັນແຫຼ່ງທ່ອງທ່ຽວ ໄດ້ແບ່ງເປັນ 2 ທີມຄື: ທີມງານສຳຫຼວດ ແລະ ວັດແທກເນື້ອທີ່ທາງພາກພື້ນດິນ ແລະ ທີມງານສຳຫຼວດສະພາບເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສ່ິງແວດລ້ອມ.

ພາຍຫຼັງການສຳຫຼວດທີມງານນ້ຂ້ນສູນກາງ ແລະ ແຂວງ ໄດ້ຮ່ວມກັນຮ່າງເອກະສານບົດລາຍງານ ການຈັດສັນແຫຼ່ງທ່ອງທ່ຽວດັ່ງກ່າວ ແລະ ໄດ້ຈັດກອງປະຊຸມຜ່ານຮ່າງບົດລາຍງານ ທ້ງ ນ ້ ໍ ເ ພ ື ່ ອ ປ ຶ ກ ສ າ ຫ າ ລ ື ໃ ຫ ້ ມ ີ ຄ ວ າ ມ ເ ປ ັ ນ ເ ອ ກ ະ ພ າ ບ ັ ນ ແ ຕ ່ ເ ບ ື ້ ອ ງ ຕ ົ ນ ກ ່ ຽ ວ ກ ັ ບ ການ ກ ຳ ນ ົ ດ ຂ ອ ບ ເ ຂ ດ ແ ຫ ຼ ່ ง ท ่ อ ง ท ่ ຽ ว , แ ນ ວ ค ว า ม ค ิ ด ใ ນ ก า ร พ ั ด ท ะ น า แ ห ຼ ่ ง ท ่ อ ง ท ่ ຽ ว . ຫ ຼ ັ ง จ า ก น ั ้ น , ข ั ้ น ส ู ง ก า ง ไ ด ้ ป ั บ ป ຸ ง บ ົ ด ล า ย ง า น ด ั ่ ง ก ่ า ว ແ ລ ้ ວ ส ่ ง ໃ ห ้ ข ะ ແ ໜ ง ก า ร ท ่ อ ง ท ่ ຽ ว ແ ข ວ ง ນ ำ ส ะ ເ ໜ ີ ต ่ ໍ อ ำ น า ด ก า ร ป ົ ก ค ອ ง ແ ข ວ ง ใ ห ้ ท ิ ด ช ี ้ ນ ำ ແ ລ ะ ข อ ก า ร ร ั บ

ຮອງເອົາບົດລາຍງານດ່ວງກ່າວ ເພື່ອເປັນບ່ອນອີງໃນການປັກຫັກໝາຍຂອບເຂດແຫຼ່ງທ່ອງທ່ຽວ ແລະ ການພັດທະນາໃນເຂດດ່ວງກ່າວໃນຕໍ່ໜ້າ.

ຮູບພາບກອງປຸ ມປຶກສາຫາລືຂອງທີມງານຈາກສູນກາງ ແລະ ແຂວງ ກ່ອນການລົງສຳຫຼວດ

II ສະພາບທົ່ວໄປຂອງແຫຼ່ງທ່ອງທ່ຽວ

1. ທີ່ຕັ້ງ ແລະ ຂອບເຂດເນື້ອທີ່

ສວນອຸທິຍານນ້ຳຕົກຕາດກວາງຊີ ຕັ້ງຢູ່ບ້ານທ່າແປ້ນ, ຕັ້ງຢູ່ທິດໃຕ້ຂອງເມືອງຫຼວງພະບາງ. ທິດຕາເວັນອອກຕິດກັບບ້ານລ້ອງເລາ, ທິດຕາເວັນຕົກຕິດກັບບ້ານປາກຊີ, ທິດເໜືອຕິດກັບບ້ານພູ້ອ, ທິດໃຕ້ຕິດກັບບ້ານຢ່າງ. ນ້ຳຕົກຕາດກວາງຊີ ຫ່າງຈາກເທດສະບານເມືອງຫຼວງພະບາງ ປະມານ 30 ກິໂລແມັດ.

ແຜນທີ່ ສປປ ລາວ ແລະ ຈຸດທີ່ຕັ້ງນ້ຳຕົກຕາດກວາງຊີ




ແຜນທີ ແຂວງຫຼວງພະບາງ
N
W
E
S
Ngoy
Nambak
Viangkham
ສະຖານທີ່ນ້ຳຕົກຕາດກວາງຊີ
Pak-Ou
Pakseng
Chomphet
Phonxai
Xiang Ngeun
Phoukhoun
Nan
1:1,000,000
0
10
20
40
60
80
Kilometers
Legend
Water fall point
Louangphrabang District

2. ສະພາບເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ

ທິມງານສຳຫຼວດ ແລະ ຈັດສັນແຫຼ່ງທ່ອງທ່ຽວໄດ້ລົງເກັບກຳຂໍ້ມູນທາງດ້ານເສດຖະກິດ, ວັດທະນະທຳ - ສັງຄົມ ແລະ ສິ່ງແວດ້ລອມ ສຳລັບການທ່ອງທ່ຽວຄື: ບ້ານທ່າແປ້ນຕັ້ງຢູ່ທາງທິດໃຕ້ຂອງເມືອງຫຼວງພະບາງ , ຕິດກັບ ອຸທິຍານແຫ່ງຊາດ ນ້ຳຕົກຕາດກວາງຊີ ມີເສັ້ນທາງຄົມມະນາຄົມເຂົ້າ-ອອກໄດ້ສະດວກດີ ໄລຍະທາງຫ່າງຈາກ ເທດສະບານເມືອງຫຼວງພະບາງ ປະມານ 30 ກິໂລແມັດ, ບ້ານທ່າແປ້ນ ມີພື້ນຖານໂຄງລ່າງທີ່ເໝາະສົມ ແກ່ການດຳລົງ ຊີວິດ ຂອງປະຊາຊົນເຊັ່ນ: ໄຟຟ້າ, ນ້ຳລິນ, ການໂທລະຄົມມະນາຄົມ, ເສັ້ນທາງລົດ, ໂຮງຮຽນ, ສຸກສາລາ, ມີເນື້ອທີ່ ປູກຝັງ ແລະ ແຫຼ່ງທ່ອງທ່ຽວນ້ຳຕົກຕາດກວາງຊີ ຊຶ່ງເປັນແຫຼ່ງທ່ອງທ່ຽວລະດັບຊາດທີ່ ມີຊື່ສຽງຂອງ ສປປ ລາວ ເຊິ່ງ ລວມ, ເຊິ່ງສະເພາະຂອງແຂວງຫຼວງພະບາງ ປະຊາຊົນບ້ານດັ່ງກ່າວອາໄສເສັ້ນ ທາງລົດເປັນຫຼັກ ໃນການເດີນທາງເຂົ້າສູ່ ຕົວເມືອງ, ຂົນສົ່ງສິນຄ້າ ແລະ ຂົນສົ່ງນັກທ່ອງທ່ຽວ ທີ່ມາທ່ຽວຊົມອຸທິຍານ ນ້ຳຕົກຕາດກວາງຊີ, ປະຊາຊົນສ່ວນໃຫ່ຍ ແມ່ນຫັນເອົາວຽກງານ ບໍລິການທ່ອງທ່ຽວເປັນຫຼັກ, ຊຶ່ງເປັນອາຊີບຕົ້ນຕໍສ ມາດສ້າງລາຍຮັບເຮັດໃຫ້ຊີວິດການເປັນຢູ່ ຂອງປະຊາຊົນດີຂຶ້ນ ເທື່ອລະກ້າວ. ບ້ານທ່າແປ້ນມີພົນລະເມືອງທັງໝົດ 554 ຄົນ, ໃນນີ້ມີຈຳນວນເພດຍິງ 273 ຄົນ, ລວມມີ 113 ຄອບຄົວ, ເຜົ່າລາວລຸ່ມ 37 ຄອບຄົວ, ມີພົນລະເມືອງ 171 ຄົນ, ຍິງ 94 ຄົນ, ເຜົ່າກຶມມຸ 72 ຄອບຄົວ, ມີພົນລະເມືອງ 358 ຄົນ, ຍິງ 169 ຄົນ ແລະ ເຜົ່າມົ້ງ 4 ຄອບຄົວ, ມີພົນລະເມືອງ 25 ຄົນ, ຍິງ 10 ຄົນ, ມີເຮືອນພັກ 2 ຫຼັງ, ມີຮ້ານອາຫານ 15 ຮ້ານ, ຮ້ານຫັດຖະກຳມີ 7 ຮ້ານ, ຮ້ານຂາຍເຄື່ອງຍ່ອຍ 14 ຮ້ານ, ເຟີນີເຈີ 2 ຮ້ານ.

ພາຍໃນບ້ານທ່າແປ້ນໄດ້ມີການຈັດຕັ້ງ ແລະ ແບ່ງຄວາມຮັບຜິດຊອບຢ່າງລະອຽດຊັດເຈນຄື: ມີຄະນະບ້ານ 3 ທ່ານ, ຍິງ 1 ທ່ານຊຶ່ງເປັນຜູ້ນຳພາ, ແບ່ງອອກເປັນ 5 ໜ່ວຍ, ບ້ານທ່າແປ້ນມີເນື້ອທີ່ນາ 6 ເຮັກຕາ, ເນື້ອທີ່ປ່າສະຫງວນ 81,25 ເຮັກຕ່າ, ເນື້ອທີ່ທຳການຜະລິດ(ສວນ) 86 ເຮັກຕ່າ, ພາຍໃນບ້ານທ່າແປ້ນສາມາດສ້າງຄອບຄົວວັດທະນະທຳ ໄດ້ 89 ຄອບຄົວລວມຍອດລາຍຮັບທັງໝົດພາຍໃນບ້ານໄລຍະ 1 ປີຜ່ານມາແມ່ນ 6.648.000.000 ກີບ, ລາຍໄດ້ ສະເລ່ຍ 12.000.000 ກີບ/ຄົນ/ປີ ລາຍຮັບດັ່ງກ່າວແມ່ນມາຈາກການບໍລິການທ່ອງທ່ຽວ ແລະ ຄ້າຂາຍເປັນສ່ວນ ໃຫ່ຍ. ນອກຈາກນັ້ນບ້ານຍັງໄດ້ສ້າງຕັ້ງກອງທຶນພັດທະນາລວມຂອງບ້ານ ມາຮອດປະຈຸບັນມີມູນຄ່າທັງໝົດ 45.000.000 ກີບ, ເຂົ້າຮ່ວມປະກັນສຸຂະພາບ ມີ 35 ຄອບຄົວ.

ວຽກງານສຶກສາພາຍໃນບ້ານທ່າແປ້ນມີໂຮງຮຽນ 1 ຫຼັງ, ມີ 5 ຊັ້ນຮຽນ, ອະນຸບານ 1 ຫຼັງ, ມີຄູອາຈານ ທັງໝົດ 7 ຄົນ, ຍິງ 4 ຄົນ, ມີນັກຮຽນທັງໝົດ 52 ຄົນ, ຍິງ 18 ຄົນ, ເດັກເກນອາຍຸຮຽນ ໄດ້ເຂົ້າຮຽນ 100%, ນອກນັ້ນພາຍ ໃນບ້ານຍັງມີ ສຸກສາລາ 2 ຫຼັງ, ມີແພດປະຈຳ 2 ຄົນ ມີສະໂມສອນບ້ານ 1 ແຫ່ງ ແລະ ມີວັດ 1 ແຫ່ງ.

ປະຊາຊົນບ້ານທ່າແປ້ນ ຍັງຄົງປົກປັກຮັກສາຮີດຄອງປະເພນີ ທີ່ເປັນເອກະລັກຂອງຕົນເຊັ່ນ: ງານບຸນສົນ ກົນ ທານ ການເວົ້າຈາອ່ອນຫວານມີການອະນຸລັກສິລະປະວັນນະຄະດີການຂັບລຳທ້ອງຖິ່ນ, ຂັບລຳຂອງບັນດາເຜົ່າ ແລະ ອື່ນໆ. ບ້ານທ່າແປ້ນແມ່ນມີຮີດຄອງປະເພນີວັດທະນະທຳທີ່ສືບທອດກັນມາໄດ້ມີການຄົບງັນ ແລະ ສະເຫຼີມ ສະຫຼອງ ງານບຸນປະເພນີຄື: ບຸນປີໃໝ່ລາວ, ບຸນປົດປີຂອງເຜົ່າກຶມມຸ, ບຸນກິນຈຽງຂອງເຜົ່າມົ້ງ, ບຸນອອກບັນສາ ແລະ ງານບຸນ ເທດສະການຕ່າງໆ.

ໃນທັດສະນະຂອງການທ່ອງທ່ຽວແລ້ວເຫັນວ່າ: ບ້ານດັ່ງກ່າວມີແຫຼ່ງທ່ອງທ່ຽວທີ່ສວຍງາມເປັນທີ່ຮູ້ຈັກ ດີຂອງ ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ; ກິດຈະກຳການທ່ອງທ່ຽວທີ່ມີໃນປະຈຸບັນຄື: ທ່ຽວຊົມສວນແມງ ກະເບື້ອ,ສວນອະນຸລັກໝີ, ວັງນ້ຳສຳລັບນັກທ່ອງທ່ຽວໄວ້ໃຫ້ອາບທີ່ສວຍງາມ, ການທ່ຽວຊົມສິນຄ້າຫັດຖະກຳຊາວບ້ານ, ຂອງທີ່ລະນຶກ ແລະ ຊົມອາຫານ ທ້ອງຖິ່ນ ໃນແຕ່ລະມື້ໄດ້ມີນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ມາທ່ຽວຊົມຫຼາຍພັນຄົນ.

3. ສະພາບດ້ານການທ່ອງທ່ຽວ

3.1.1 ການຄຸ້ມຄອງ ແລະ ການນຳໃຊ້ແຫຼ່ງທ່ອງທ່ຽວ

ປັດຈຸບັນ ອຸທິຍານນ້ຳຕົກຕາດກວາງຊີ ຕັ້ງຢູ່ບ້ານທ່າແປ້ນ ເມືອງ ແລະ ແຂວງຫຼວງພະບາງ ຊຶ່ງ ອຳນາດການປົກຄອງແຂວງຫຼວງພະບາງ ໄດ້ມອບຄວາມຮັບຜິດຊອບໃຫ້ແກ່ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນຜູ້ຄຸ້ມຄອງ ແລະ ບໍລິຫານ ໂດຍການມີສ່ວນຮ່ວມຂອງ ປະຊາຊົນທ້ອງຖິ່ນເປັນຕົ້ນເກັບປີ້ເຂົ້າຊົມອຸທິຍານນ້ຳຕົກຕາດກວາຊີ, ຄ່າປີ້ເຂົ້າຊົມສຳລັບຄົນຕ່າງປະເທດ ແມ່ນ 20,000 ຕໍ່ຄົນ ແລະ 10,000 ກີບ ສຳລັບນັກທ່ອງທ່ຽວພາຍໃນ. ນອກຈານັ້ນ ກໍມີການເກັບປີ້ຝາກ ລົດຄື : ລົດໃຫຍ່ 25 ບ່ອນນັ່ງຂຶ້ນໄປ 10,000 ກີບ, ລົດຕູ້, ເກ໋ງ, ກະບະ, ຕຸກຕຸກ 5,000 ກີບ, ລົດຈັກ 3,000 ກີບ, ລົດຖີບ 2,000 ກີບ, ເດີ່ນຝາກລົດລວມຂອງບ້ານ ມີ 1 ເດີ່ນ, ເດີ່ນຝາກລົດຂອງເອກະຊົນ ມີ 2 ເດີ່ນ ໃນນັ້ນ ການເສຍພັນທະເຂົ້າບ້ານ 1,000,000 ກີບຕໍ່ປີຕໍ່ເດ່ີນ. ລາຍຮັບທັງໝົດທີ່ໄດ້ຮັບຈາກ ການເກັບຄ່າບັດເຂົ້າຊົມແຫຼ່ງທ່ອງທ່ຽວ ແມ່ນຈະຕ້ອງໄດ້ໄປຖອກໃຫ້ ງົບປະມານຂອງແຂວງ ທີ່ພະແນກ ການເງິນແຂວງ ກຳນົດມື້ຖອກແມ່ນ ທຸກ ໆ 15 ມື້ ຫຼື ເດືອນໜຶ່ງ 2 ຄັ້ງ.

ສຳລັບຄ່າບໍລິຫານເປັນຕົ້ນ : ການຜູ້ຄຸ້ມຄອງ, ປົກປັກຮັກສາ, ການຂາຍບັດເຂົ້າຊົມ, ຝາກລົດ, ການອານະໄມ, ຄ່າແຮງງານພະນັກງານ, ຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ. ແມ່ນ ຕ້ອງໄດ້ຂຶ້ນແຜນງົບປະມານ ໃນແຕ່ລະເດືອນ. ປັດຈຸບັນຄະນະຮັບຜິດຊອບຕາດກວາງຊີມີທັງໝົດ 11 ທ່ານ ຍິງ 2 ນອກຈາກພະນັກງານບໍລິຫານແລ້ວພາກລັດ ແລະ ຊາວບ້ານແລ້ວ, ຍັງມີພະນັກງານສູນ ອະນຸລັກໝີ ຈຳນວນ 6 ທ່ານ ແຕ່ການບໍລິຫານ ແລະ ຄຸ້ມຄອງສູນດັ່ງກ່າວແມ່ນເຂົ້າເຈົ້າກຸ້ມຕົນເອງ.

ສຳລັບທຸກໆ ກິດຈະກຳການປັບປຸງ, ກໍ່ສ້າງສິ່ງອຳນວຍຄວາມສະດວກພາຍໃນແຫຼ່ງທ່ອງທ່ຽວ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຈະຕ້ອງໄດ້ ຂຶ້ນແຜນງົບປະມານລະອຽດ ເພື່ອສະເໜີຕໍ່ ອຳນາດການປົກຄອງແຂວງ ເພື່ອຂໍອະນຸມັດ ຈຶ່ງສາມາດຈັດຕັ້ງປະຕິບັດໄດ້.

ສະພາບ ດ້ານໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ພາຍໃນນ້ຳຕາດຍັງຂາດເຂີນ ຈຳນວນໜ່ວຍເປັນຕົ້ນ : ປ້າຍແນະນຳ, ປ້າຍຊີ້ບອກ, ປ້າຍເຕືອນ, ປ້າຍຊື່ພັນຊະນິດຕົ້ນໄມ້, ຮາວກັນຕົກ, ຂັ້ນໄດບາງຈຸດ, ຂໍ້ຄ້ຳມັ້ນບາງບ່ອນ, ໂຕະຕ່ຳ, ຕູບພັກຜ່ອນ, ຕຸ່ງອາບແດດ, ທາງຍ່າງຂົ້ນ-ລົງບໍລິເວນດ້ານເທິງ ແລະ ລຸ່ມຂອງນ້ຳຕົກຕາດ, ຫ້ອງນ້ຳສາທາລະນະໃນແຕ່ລະຈຸດ, ຈຸດຊົມທິວທັດທຳມະຊາດ ລວມທັງກະຕ່າໃສ່ຂີ້ເຫຍື້ອຍັງບໍ່ທັນພຽງພໍ, ສ່ວນທີ່ມີກໍເປ່ເພ ແລະ ຊຸດໂຊມໃຊ້ງານບໍ່ໄດ້. ປ້າຍບົ່ງກ່າວ ຄວນເຮັດເປັນຫລາຍພາສາ ພ້ອມທັງໃສ່ສັນຍາລັກ ເພື່ອໃຫ້ສາມາດແນໃຫ້ນໄດ້ສະດວກ ເລີ່ມແຕ່ຈຸດລານຈອດລົດເປັນຕົ້ນໄປ.

ການັຈດັສນ້ຮານຂາຍເຄື່ອງທັດຖະກຳ, ຮ້ານອາຫານ ແລະ ເຄື່ອງດື່ມ ຍັງບໍ່ທັນເປັນລະບຽບ ຮຽບຮ້ອຍ, ມີລັກສະນະກະແຈກກະຈາຍ, ຮ້ານຂາຍເຄື່ອງມີຂະໜາດແຕກຕ່າງ, ບໍ່ທັນເປັນເອກະລັກຂອງ ທ້ອງຖິ່ນ ແລະ ປົນເປັກນເຮັດໃຫ້ຜູ້ມາໃຊ້ບໍລິການມີຄວາມສັບສົນ. ນອກຈາກນີ້, ເວົ້າເຖິງການເດີນທາງ ເຂ້ົາ-ອອກ ຕາດກວາງຊີຂອງັນກ່ທ່ອງທ່ຽວຍັງບໍ່ທັນໄດ້ເຂ້ົາສູ່ລະບຽບ ມີລັກສະນະຊະຊາຍເປັນຕົ້ນ ັນກ ທ່ອງທ່ຽວອິດສະຫ ທີ່ໄດ້ຮັບຂ້ົມນ ຂ່າວສານແລ້ວເດີນທາງໄປເອງ, ບາງ ົ້ງຄາວກ ົ່ພບບັນຫາ ເຊ່ນ : ການ ຫ ລ້ງທາງ, ເກ ດອຸປະຕ ເຫດ ແລະ ສ້າງຄວາມ ບ່ສະຫ ງບ ໃຫ ແກ່ປະຊາຊົນທ ອງ ຖິ່ນ.

ການບໍລິການອາຫານ ແລະ ເຄື່ອງດື່ມໃຫ ແກ່ັນກ ທ ອງທ ຽວ ທ ເ ົ້າມາ ທ ຽວ ົ ຊົມ ້ ຕົກຕາດກວາງຊີ ເ ັນ ວ່າ ດ ານການ ບໍລິການ ັຍ ມ ພຽງ ແ ຕ ປະ ລ ມານ, ສ ວນ ຄຸ ນ ະ ພາ ບ ແລະ ດ ານ ສຸ ຂ າ ອ ານ ໄ ມ ແ ມ ັຍ ບ ່ ທ ັນ ໄ ດ ມ າ ດ ຕ ະ ຖ ານ. ນ ອ ກ ຈ າ ກ ນ ້ ,ີ ຜ ປ ະ ກ ອ ບ ການ ບໍ ລ ິ ການ ຮ ານ ອ າ ຫ ານ ແ ລ ະ ເ ຄ ື ່ ອ ງ ດ ື ່ ມ ໄ ດ ຜ ່ ານ ການ ຝ ກ ອ ບ ຮ ມ ພຽ ງ ຈ ານ ວ ນ ນ ້ ,ອ ຍ ແ ຕ ່ ສ ວ ນ ໃ ຫ ຍ ່ ແ ມ ນ ບ ່ ໄ ດ ຜ ່ ານ ການ ຝ ກ ອ ບ ຮ ມ ວ ຊ ກ ງ ານ ບ ໍ ລ ິ ການ ່ ຈ ງ ເ ຮ ັດ ໃ ຫ ການ ບ ໍ ລ ິ ການ ນ ດ ່ ງ ກ ່ າ ອ ັ ຊ ຸ ກ ້ ຊ ່ າ ແ ລ ະ ຄ ຸ ນ ນ ະ ພ າ ບ ບ ່ ໄ ດ ດ ີ ເ ທ ່ າ ທ ີ ຄ ວ ນ.

3.1.2 ສະພາບໂຄງສ້າງດ້ານການບໍລິການ

ສະພາບດ້ານໂຄງສ້າງການບໍລິການແມ່ນມີຄວາມສະດວກສົມຄວນ ປັດຈຸບັນມີຮ້ານຂາຍເຄື່ອງທີ່ ລະນຶກ ແລະ ຮ້ານອາຫານທັງໝົດ 38 ຮ້ານ ເປັນຂອງຊາວບ້ານທ່າແປ້ນໂດຍກົງ, ໃນນັ້ນ 2 ຮ້ານ ແມ່ນມາຈາກບ້ານເມືອງຂາຍ ແລະ ບ້ານຖິ່ນຊົ່ມ. ໃນຊ່ວງປີ 2006-2007 ທະນາຄານພັດທະນາອາຊີ ໄດ້ໃຫ້ທຶນສະໜັບສະໜູນ ພາຍໃຕ້ໂຄງການພັດທະນາການທ່ອງທ່ຽວລຸ່ມແມ່ນ້ຳຂອງ ປັບປຸງເສັ້ນທາງປູຢ່າ ງແຕ່ເທດສະບານເມືອງຫຼວງພະບາງ ຫາ ເຂດອຸທິຍານນ້ຳຕົກຕາດກວາງຊີ ໄລຍະທາງ 24 ກິໂລແມັດ.

ປັດຈຸບັນມີນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມ ອຸທິຍານນ້ຳຕົກນ້ຳຕາດ ກວາງຊີ ມີອັດຕາຂະຫຍາຍຕົວຢ່າງຕໍ່ເນື່ອງໃນປີ 2014 ມີນັກທ່ອງທ່ຽວ 215,000 ເທື່ອຄົນ ແລະ ປີ 2015 ຄາດວ່າຈະມີ 250,000 ຄົນ. ສະຖານທີ່ແຫ່ງນີ້ໄດ້ກາຍເປັນເປັນທີ່ໜ້ານິຍົມຊົມຊອບຂອງນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ. ຊຶ່ງສ່ວນໃຫຍ່ ມາຈາກ ກຸ່ມບໍລິສັດທ່ອງທ່ຽວ, ນັກທ່ອງທ່ຽວອິດສະຫຼະ ແລະ ອື່ນໆ ນອກຈາກນັ້ນ ແລ້ວ ບັນດາໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານໃນບໍລິເວນໃກ້ຄຽງໄດ້ຮັບການພັດທະນາດີຂຶ້ນເປັນກ້າວໆ ຊຶ່ງພາກທຸລະກິດ ແລະ ປະຊາຊົນທ້ອງຖິ່ນເຫັນໄດ້ຄວາມສຳຄັນຕໍ່ການພັດທະນາການທ່ອງທ່ຽວ, ສະແດງໃຫ້ເຫັນວ່າ ການມີສ່ວນຮ່ວມ ຂອງປະຊາຊົນທ້ອງຖິ່ນກວມເຖິງ 80%. ສະພາບໂຄງລ່າງພື້ນໃນບໍລິເວນອຸທິຍານນ້ຳຕົກຕາດກວາງຊີ ໂດຍລວມ ແມ່ນໄດ້ຮັບການພັດທະນາດີຂຶ້ນພໍສົມຄວນ ເປັນຕົ້ນ : ເສັ້ນທາງເຂົ້າຫາແຫຼ່ງທ່ອງທ່ຽວ, ປະຕູໂຂງ, ຫ້ອງເກັບບັດເຂົ້າຊົມ, ຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວ, ເສັ້ນທາງຍ່າງທ່ຽວຊົມ, ຫ້ອງນ້ຳສາທາລະນະຢູ່ 3 ຈຸດ, ຈຸດຊົມວິວ, ຂົວຂ້າມຫ້ວຍຢູ່ແຕ່ລະຈຸດ, ຂັ້ນໄດຂຶ້ນ-ລົງ, ຈຸດບໍລິການຫ້ອງປ່ຽນເຄື່ອງ ເວລາລົງອາບນ້ຳ, ຮ້ານນ້ຳຊາ-ກາເຟ ແລະ ເຂົ້າໜົມ, ສິ່ງອຳນວຍຄວາມສະດວກ ໃນບໍລິເວນສູນອະນຸລັກໝີ ເຫັນວ່າໄດ້ຮັບການປັບປຸງດີຂຶ້ນ. ແຕ່ເຖິງຢ່າງໃດກໍດີ ບັນດາໂຄງລ່າງສິ່ງອຳນວຍຄວາມສະດວກດ້ານຕ່າງໆ ທີ່ກ່າວມາຂ້າງເທິງນີ້ ເຫັນວ່າຈະຕ້ອງໄດ້ເອົາໃຈໃສ່ ໃນການປັບປຸງ ແລະ ພັດທະນາໃຫ້ໄດ້ມາດຕະຖານ ແລະ ສາມາດໄປ-ມາໄດ້ສະດວກສະບາຍຕະຫລອດປີ.

ບ່ອນຂາຍບັດເຂົ້າຊົມສະຖານທີ່ທ່ອງທ່ຽວອຸທິຍານນ້ຳຕົກຕາດກວາງຊີ

ຮູບພາບສະພາບໂຄງສ້າງການບໍລິການໃນແຫ່ງທ່ອງທ່ຽວ

3.1.3 ການຄົມມະນາຄົມຂົນສົ່ງພາຍໃນແຫຼ່ງທ່ອງທ່ຽວ

ສະພາບດ້ານການຄົມມະນາຄົມ-ຂົນສົ່ງ ເຂົ້າສູ່ແຫຼ່ງທ່ອງທ່ຽວນ້ຳຕາດກວາງຊີ ແມ່ນມີຄວາມສະດວກສະບາຍສາມາດເດີນທາງເຂົ້າ - ອອກ. ຊຶ່ງອອກຈາກເທດສະບານເມືອງຫຼວງພະບາງ ໄປທາງທິດຕາເວັນຕົກ ໄປຫາຕາດກວາງຊີເປັນເສັ້ນທາງຢູ່ຫ່າງມີຄວາມຍາວປະມານ 30 ກິໂລແມັດ ໃຊ້ເວລາປະມານ 40 ນາທີ, ຊຶ່ງສາມາດເດີນ ທາງໄປໄດ້ຕະຫລອດປີ. ພວກເຮົາມີສະມາຄົມລົດຕູ້ ແລະ ລົດຕຸກໆໄວ້ຄອຍບໍລິການຂົນສົ່ງ ນອກຈາກນີ້, ຍັງມີລົດຈັກ ແລະ ລົດຖີບໄວ້ໃຫ້ເຊົ່າສຳລັບນັກທ່ອງທ່ຽວ. ບັນດາຫ້ອໜ່ວຍທຸລະກິດດ່ັງກ່າວລ້ວນແລ້ວແຕ່ໄດ້ຮັບການອະນຸຍາດຈາກຂະແໜງການກ່ຽວຂ້ອງຈາກພາກລັດ.

ສະພາບເສັ້ນທາງເຂົ້າແຫຼ່ງທ່ອງທ່ຽວອຸທິຍານນ້ຳຕົກຕາດກວາງຊີ

ພາບດ້ານໜ້າ ອຸທິຍານນ້ຳຕົກຕາດກວາງຊີ

ທາງໃນເທດສະບານເມືອງຫຼວງພະບາງ

3.1.4 ການກຳນົດທິດຈະກຳພາຍໃນແຫຼ່ງທ່ອງທ່ຽວ

ກິດຈະກຳການທ່ອງທ່ຽວໃນວົງຈອນການທ່ອງທ່ຽວດັ່ງກ່າວແມ່ນ: ການທ່ຽວຊົມເບິ່ງແຫຼ່ງທ່ອງທ່ຽວ, ວັດທະນະທຳ ແລະ ວິຖີຊີວິດຂອງປະຊາຊົນ, ການຍ່າງປ່າລະຫ່ວ່າງບ້ານຕໍ່ບ້ານ, ການຂີ່ລົດຖີບຕາມເສັ້ນທາງວົງຈອນການທ່ອງທ່ຽວ ແລະ ການພັດທະນາເຮືອນພັກແຮມນຳປະຊາຊົນ.

- ການທ່ຽວຊົມເບິ່ງແຫຼ່ງທ່ອງທ່ຽວທາງດ້ານວັດທະນະທຳ.
- ການມາສັກກະລະບູຊາສິ່ງສັກສິດຢູ່ຖ້ຳອອກຮູ.
- ກິດຈະກຳການຍ່າງປາ ແຕ່ບ້ານລ້ອງເລົາ 1 (ບ້ານເຜົ່າກຶມໝຸ) ລ້ອງເລົາ 2 (ເຜົ່າມົ້ງ) ໄປຫາ ນ້ຳຕົກຕາດກວາງຊີ ໃຊ້ເວລາຍ່າງປະມານ 3 ເຖິງ 4 ຊົ່ວໂມງ.
- ກິດຈະກຳໃນຍາມຄ່ຳຄືນ ໃຫ້ນັກທ່ອງທ່ຽວໄດ້ສຳຜັດກັບບັນຍາກາດອັນເຢືອກເຢັນ ປະສານກັບ ສຽງນ້ຳຕົກ
- ຟັງການເລົ່າປະຫວັດ ຫຼື ບັນ ລະຍາຍ ກ່ຽວກັບປະຫວັດຄວາມເປັນມາຂອງວັດບ້ານທ່າແປ້ນ ແລະ ກິດຈະກຳພາຍໃນວັດທີ່ເຄີຍຕິດພັນກັບການດຳລົງຊີ ວິດ
- ການທ່ອງທ່ຽວຍ່າງປ່າໃນບໍລິເວນອຸທິຍານນ້ຳຕົກຕາດກວາງຊີ, ຂີ່ລົດຖີບໃນບໍລິເວນວົງຈອນ ການທ່ອງທ່ຽວ.
- ການທ່ຽວຊົມເບິ່ງການສາທິດວິທີການຜະລິດ ແລະ ຮຽນວິທີການຕຳຜ້າແພ
- ການບໍລິການອາຫານ ແລະ ເຄື່ອງດື່ມ.
- ຈັດງານລ້ຽງພາຍໃນຕາດກວາງຊີ.
- ກິດຈະກຳໂດດນ້ຳ, ອາບນ້ຳ, ອາບແດດ
- ກິດຈະກຳບໍລິການຖ່າຍຮູບ
- ການສຶກສາຄົ້ນຄວ້າກ່ຽວກັບສິລະປະລວດລາຍການຄວັດ, ແກະສະຫລັກໄມ້. ການແຕ້ມຮູບແບບ ສະຖາປັດຕິຍະກຳ ຕາມເອກະລັກຂອງສິລະປະບູຮານຫຼວງພະບາງ
- ການສຶກສາຄົ້ນຄ້ວາພັນໄມ້ ແລະ ຊີວະນາໆພັນຕ່າງໆ ເໝາະສົມສຳລັບການທ່ອງທ່ຽວແບບ ອະນຸລັກປະຊາຊົນມີສ່ວນຮ່ວມ.

ແຕ່ເຖິງຢ່າງໃດກໍຕາມ, ກິດຈະກຳທີ່ກ່າວມາຂ້າງເທິງຍັງຕ້ອງມີການປັບປຸງໃຫ້ດີຂຶ້ນ, ບາງກິດຈະ ກຳກໍ ບໍ່ຄວນເຮັດເຊັ່ນ:.ຖ່າຍຮູບນອກບໍລິເວນທີ່ມີຮາວກັ້ນ, ໂດດນ້ຳໃນທີ່ສູງ, ສ່ວນສະຖານທີ່ປິກນິກ ແລະ ຈັດ ງານລ້ຽງກໍຍັງບໍ່ພຽງພໍໃນການຮອງຮັບນັກທອງທ່ຽວ, ພ້ອມກັນນັ້ນກໍ່ຕ້ອງໄດ້ສ້າງກິດຈະກຳອື່ນໆທີ່ຫຼາກ ຫຼາຍ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງນັກທ່ອງທ່ຽວພາຍໃນ ແລະ ນັກທ່ອງທ່ຽວສາກົນທີ່ ເຂົ້າມາ ທ່ຽວຊົມຕາດກວາງຊີ.

ຈັດງານລ້ຽງໃນບໍລິເວນຕາດກວາງຊີ ສະຖານທີ່ອານຸຍາດໃຫ້ລ້ຽງອາບນ້ຳ

3.2 ສະພາບດ້ານການທ່ອງທ່ຽວຢູ່ຂດພາຍນອກ ແລະ ເຂດໃກ້ຄຽງແຫ່ງທ່ອງທ່ຽວ

3.2.1 ສະພາບໂຄງສ້າງດ້ານການບໍລິການພາຍນອກແຫ່ງທ່ອງທ່ຽວ

ບັນດາໝູ່ບ້ານທີ່ມີທີ່ຕັ້ງຕາມເສັ້ນທາງໄປຫາຕາດກວາງຊີເປັນໝູ່ບ້ານທີ່ໄດ້ຮັບຜົນປະໂຫຍດຈາກ ການປັບປຸງເສັ້ນທາງເຂົ້າຫາ ແຫຼ່ງທ່ອງທ່ຽວເຊິ່ງໄດ້ຮັບການສະໜັບສະໜູນຈາກໂຄງການພັດທະນາ ການທ່ອງທ່ຽວລຸ່ມແມ່ນ້ຳຂອງ(ADB)ເຊິ່ງກວມເອົາ15 ກ່ວາໝູ່ບ້ານເວົ້າລວມ.ເວົ້າສະເພາະແມ່ນບ້ານທ່າ ແປ້ນທີ່ເປັນບ້ານໄດ້ຮັບຜົນປະໂຫຍດໂດຍກົງຈາກແຫຼ່ງທ່ອງທ່ຽວນ້ຳຕົກຕາດກວາງຊີ.ໃນໄລຍະດັ່ງກ່າວ ໂຄງການໄດ້ໄປຊ່ວຍຊາວບ້ານສ້າງເປັນເຮືອນພັກແຮມ (Homestay), ໄດ້ສ້າງຕັ້ງກຸ່ມບໍລິການທ່ອງທ່ຽວ ຕ່າງໆຂຶ້ນ,ດັ່ງທີ່ພວກເຮົາໄ ດ້ນຳສະເໜີຂ້າງເທິງວ່າແຫຼ່ງທ່ອງທ່ຽວດັ່ງກ່າວ ນີ້ມີຄວາມຕິດພັນກັບວິຖີ ການດຳລົງຊີວິດ ຂອງບ້ານທ່າແປ້ນດັ່ງນັ້ນ, ພາຍນອກແຫຼ່ງທ່ອງທ່ຽວແມ່ນຈະໄດ້ປັບປຸງຄືນບັນດາ ກິດຈະກຳການທ່ອງ ທ່ຽວ ແລະ ກຸ່ມບໍລິການຕ່າງໆຂອງບ້ານທີ່ມີແລ້ວຜ່ານມາ, ປະກອບກັບອາຊີບເສີມທີ່ ຊາວ ບ້ານປະກອບອາຊີບເສີມທີ່ຕິດພັນກັບຜະລິດຕະພັນການທ່ອງທ່ຽວ ເຊັ່ນ: ການບໍລິການອາຫານ ເຄື່ອງ,ເຄື່ອງຫັດຖະກຳຈັກສານ ,ແລະຄ້ວດແກະສະລັກໄມ້ ເປັນສິນຄ້າເຄື່ອງທີ່ລະນຶກຂາຍໃຫ້ນັກທ່ອງທ່ຽວ.

3.2.2 ການຄົມມະນາຄົມຂົນສ່ງພາຍນອກແຫ່ງທ່ອງທ່ຽວ

ຈາກ ຕ ອ ເມືອ ງ ຫ ວ ງ ພ ະ ບ າ ງ ເດີນ ທ າ ງ ໄ ປ ເ ຖ ິ ງ ນ ້ ຳ ຕ ົ ກ ຕ າ ດ ກ ວ າ ງ ຊ ີ ໂ ດ ຍ ທ າ ງ ລ ົ ດ ໃ ຊ ້ ເ ວ ລ າ ປ ະ ມ ານ 40 ນ າ ທ ີ . ຍ ້ ອ ນ ເ ຫ ັ ນ ໄ ດ ້ ຄ ວ າ ມ ສ ຳ ຄ ັ ນ ແ ລ ະ ຄ ວ າ ມ ມ ີ ຊ ື ່ ສ ຽ ງ ໂ ດ ່ ງ ດ ັ ງ ຂ ອ ງ ນ ້ ຳ ຕ ົ ກ ຕ າ ດ ກ ວ າ ງ ຊ ີ , ໃ ນ ປ ີ 2006-2007 ອ ົ ງ ກ ານ ທ ່ ອ ງ ທ ່ ຽ ວ ແ ຫ ່ ງ ຊ າ ດ ຈ ່ ຽ ງ ໄ ດ ້ ຂ ຸ ນ ຂ ອ ງ ຍ ກ ຍ ານ ຊ ່ ວ ຍ ເ ຫ ຼ ື ອ ທ າ ງ ດ ้ ານ ງ ົ ບ ປ ະ ມ ານ ຈ າ ກ ທ ະ ນ າ ຄ ານ ພ ັ ດ ທ ະ ນ າ ອ າ ຊ ີ ເ ພ ື ່ ອ ປ ູ ຢ າ ງ ທ າ ງ ເ ຂ ົ ້ າ ໄ ປ ຫ ນ ້ ຳ ຕ ົ ກ ຕ າ ດ ກ ວ າ ງ ຊ ີ ມ ີ ຄ ວ າ ມ ຍ າ ວ 24,2 ກ ິ ໂ ລ ແ ມ ັ ດ ຊ ຶ ່ ງ ມ ີ ມ ູ ນ ຄ ່ າ ການ ກ ໍ ່ ສ ້ າ ງ 1,3 ລ ້ ານ ໂ ດ ລ າ ສ ະ ຫ ະ ລ ັ ດ . ປ ັ ດ ຈ ຸ ບ ັ ນ ການ ເ ຂ ົ ້ າ ເ ຖ ິ ງ ນ ້ ຳ ຕ ົ ກ ຕ າ ດ ກ ວ າ ງ ຊ ີ ຈ ່ ຽ ງ ມ ີ ຄ ວ າ ມ ສ ະ ດ ວ ກ ສ ະ ບ າ ຍ ພ າ ຫ ະ ນ ะ ຂ ົ ນ ສ ່ ง ท ุ ก ป ะ เ ผ ด ส า ม า ด เ ข ้ า เ ถ ิ ง ไ ด ้ ต ะ ห ล อ ด ป ี ເ ຊ ່ ນ : ລ ດ ຕ ู ้ ນ ້ ອ ຍ ແ ລ ະ ລ ດ ເ ມ 45 ບ ່ ອ ນ ັ ่ ง . ນ ອ ກ ຈ າ ກ ນ ี ้ ການ ເ ຂ ົ ້ າ ເ ຖ ິ ງ ແ ຂ ວ ง ห ว ง พ ะ บ า ง ท ำ ส า ม า ด เ ข ้ า ไ ด ้ ท ุ ก ท า ง ແ ລ ະ ก ็ ม ี ค ว า ม ส ะ ด ว ก ส ะ บ า ย ເ ປ ັ ນ ต ้ น :

ທາງອາກາດ:

ນັກທ່ອງທ່ຽວສາມາດເຂົ້າເຖິງແຂວງຫວງພະບາງໂດຍສາຍການບິນພາຍໃນ ແລະ ສາຍການຕ່າງປະເທດ ໂດຍມີງຈາກຕ່າງປະເທດ. ສາຍການບິນມາຈາກຣ່າໂນຍ, ຊຽງໃໝ, ຊຽງຮ່ຽ, ສຽມຽບ, ແລະ ບາງກອກ. ສຳລັບສານການບິນພາຍໃນແມ່ນມາຈາການະຄອນຫວງ ວຽງຈັນ ແລະ ປາກເຊ.

ທາງບົກ:

ຈາການະຄອນຫວງວຽງຈັນ ເຖິງແຂວງຫວງພະບາງ ໃຊ້ເວລາໃນການເດີນທາງດ້ວຍລົດປະມານ 6-8 ຊ່ວໂມງ. ປັດຈຸບັນມີລົດເມໂດຍສານບໍລິການ ວຽງຈັນ-ຫວງພະບາງ-ວຽງຈັນ ທຸກໆມື້. ນອກຈາກນີ້ ການເດີນທາງດ້ວຍລົດກັຍງສາມາດເຂົ້າມາທາງຊາຍແດນຈີນ (ດ່ານບໍ່ເຕນ-ບໍ່ຫານ), ຊາຍແດນຫວຽດນາມ (ດ່ານປາງຫົ່ນ-ດຽນບຽນຟູ) ແລະ ຊາຍແດນໄທໂດຍຜ່ານ ແຂວງ ໄຊຍະບູລີ (ດ່ານບ້ານເຫືອງ-ທ່າຈີ, ດ່ານ ເມືອງເງິນ, ດ່ານພູດ-ຫ້ວຍໂກນ).

ທາງນ້ຳ:

ນັກທ່ອງທ່ຽວຕ່າງປະເທດ ສາມາດເດີນທາງເຂົ້າເຖິງແຂວງຫວງພະບາງ ໂດຍທາງເຮືອ. ເດີນທາງ ມາຈາກເມືອງຊຽງຂອງປະເທດໄທ ເມືອງລາວແມ່ນຫ້ວຍຊາຍ ແຂວງບໍ່ແກ້ວ ເດີນທາງມາປາກແບ່ງ ແລະ ມາເຖິງຫວງພະບາງ ໃຊ້ເວລາໃນການເດີນທາງ 2 ວັນ. ນັກທ່ອງທ່ຽວທີ່ມາຕາມເສັ້ນທາງນີ້ ສ່ວນຫາຍ ແມ່ນນັກທ່ອງທ່ຽວທີ່ມາຈາກທະວີບຢູໂລບ ແລະ ຄ່າບໍລິການແມ່ນເກັບເປັນລາຍການ ໂດຍສາມາດຄິດ ໄລ່ເປັນຄົນ ແລະ ເປັນຄະນະ.

3.2.3 ຜະລິດຕະພັນການທ່ອງທ່ຽວທີ່ມີໃນບໍລິເວນພາຍນອກ ແລະ ເຂດໃກ້ຄຽງ

ຢູ່ພາຍນອກນ້ຳຕົກຕາດກວາງຊີ ກໍມີຜະລິດຕະພັນການທ່ອງທ່ຽວທີ່ຫຼາກຫຼາຍທີ່ ເປັນຫນ້າດຶງດູດ ນັກທ່ອງທ່ຽວ. ນັບທັງແຫ່ງທ່ອງທ່ຽວທີ່ຢູ່ເຂດນອກ ແລະ ບໍລິເວນເຂດໃນເມືອງນໍລະຄົກໂລກຫວງ ພະບາງ. ແຕ່ເຖິງຢ່າງໃດກໍຕາມ ນັກທ່ອງທ່ຽວສ່ວນຫາຍທີ່ມາທ່ອງທ່ຽວເມືອງນໍລະຄົກໂລກຫວງພະບາງ ຕ້ອງໄດ້ ໄປທ່ຽວຊົມ ຫ ຫ້ນ້ຳຢູ່ນ້ຳຕົກຕາດກວາງຊີ.

3.2.4 ກິດຈະກຳການທ່ອງທ່ຽວ, ການສ້າງເຄືອຂ່າຍຜະລິດ ແລະ ສະໜອງຜະລິດຕະພັນການທ່ອງທ່ຽວ

ກິດຈະກຳການທ່ອງທ່ຽວພາຍນອກ

ພາຍນອກຂອບເຂດນ້ຳຕົກຕາດກວາງຊີ ກໍມີກິດຈະກຳການທ່ອງທ່ຽວທີ່ໂດດເດ່ນ ແລະ ເປັນທີ່ດຶງ ດູດໃຈນັກທ່ອງທ່ຽວຫາຍແຫ່ງ. ໂດຍເລີ່ມຈາກສະຖານທີ່ທ່ອງທ່ຽວທາງດ້ານວັດທະນະທຳ ແລະ ນໍລະຄົກ

ທີ່ຢູ່ໃນເຂດມໍລະດົກໂລກຫຼວງພະບາງ ເຊັ່ນ: ພະລາດຊະວັງເກົ່າ, ຫໍພະບາງ, ວັດຊຽງທອງ, ຖ້ຳຕ່ຳ, ຕາດແສ, ຫັດຖະກຳບ້ານຊ່າງຄ້ອງ ແລະ ອື່ນໆ.

ການສ້າງເຄືອຄ່າຍຜະລິດ ແລະ ສະໜອງຜະລິດຕາມທ່ອງທ່ຽວ

ສຳລັບກົດຈະກຳການສ້າງເຄືອຄ່າຍ ແລະ ສະໜອງຜະລິດຕະພັນການທ່ອງທ່ຽວ ທີ່ໂດດເດັ່ນ ແມ່ນການຜະລິດ, ການສະໜອງ ແລະ ການຂາຍເຄື່ອງຫັດຖະກຳແຜ່ນແພປະເພດຕ່າງໆ, ເຄື່ອງຫັດຖະກຳເຈ້ຍປໍສາ, ຫັດຖະກຳຈັກສານ, ການແຕ້ມຮູບ ແລະ ອື່ນໆ ຂອງປະຊາຊົນຊາວຫຼວງພະບາງ. ເຄື່ອງຫັດຖະກຳປະເພດຕ່າງໆທີ່ກ່າວມານັ້ນ ສ່ວນຫຼາຍແມ່ນນຳມາວາງຂາຍຢູ່ຕະຫຼາດກາງຄືນ ແລະ ຕາມຮ້ານຮ້ານຫັດຖະກຳໃນທ່ວເທດສະ ບານແຂວງ. ມາເຖິງປັດຈຸບັນ ມີປະຊາຊົນມາວາງຂາຍເຄື່ອງຫັດຖະກຳຢູ່ຕະຫຼາດກາງຄືນຈຳນວນຫຼາຍກ່ວາ 800 ຮ້ານ, ປະຊາຊົນສາມາດສ້າງລາຍຮັບຈາກການຂາຍຜະລິດຕະພັນດັ່ງກ່າວໃນແຕ່ລະປີເປັນຈຳນວນບໍ່ໜ້ອຍ ຊ່ວຍເຮັດໃຫ້ປະຊາຊົນຫຼຸດຜ່ອນ ຄວາມທຸກຍາກ ຕາມນະໂຍບາຍຂອງລັດຖະບານ.

ການສ້າງເຄືອຄ່າຍ ແລະ ສະໜອງຜະລິດຕະພັນການທ່ອງທ່ຽວ ປັດຈຸບັນແມ່ນຍັງບໍ່ທັນພຽງພໍຕໍ່ກັບ ຄວາມຮຽກຮ້ອງຕ້ອງການຂອງນັກທ່ອງທ່ຽວ. ໃນໄລຍະຜ່ານມາ, ປະຊາຊົນຢູ່ບ້ານທ່າແປ້ນຜະລິດເຄື່ອງ ຫັດຖະກຳຈັກສານດ້ວຍຕົນເອງກວມເອົາ 70% ແລະ ນຳເຂົ້າ 30% ແຕ່ມາຮອດປັດຈຸບັນ ຊາວບ້ານໄດ້ ຜະລິດເຄື່ອງຫັດຖະກຳຈັກສານພຽງແຕ່ 30% ກົງກັນຂ້າມນຳເຂົ້າ 70%. ທັງນີ້ກໍເພື່ອຕອບສະໜອງຄວາມ ຕ້ອງການຂອງຕະຫຼາດນັກທ່ອງທ່ຽວ. ເຖິງຢ່າງໃດກໍດີ ຄວາມຮຽກຮ້ອງຕ້ອງການດ້ານການບໍລິການ ໃຫ້ໄດ້ ມາດຕະຖານ ທາງດ້ານປະລິມານ ແລະ ຄຸນນະພາບນັ້ນ ເຫັນວ່າປະຊາຊົນ ມີຄວາມຕ້ອງການ ຝຶກອົບຮົມ ກ່ຽວກັບການບໍລິການນຳທ່ຽວ, ການຈັກສານ, ການປຸງແຕ່ງອາຫານ ແລະ ເຄື່ອງດື່ມ ແນໃສ່ຕອບສະໜອງ ການບໍລິການໃຫ້ວ່ອງໄວ ແລະ ທັນກັບສະພາບໃນປັດຈຸບັນ

ເອົາຮູບພາບຮ້ານຂາຍເຄື່ອງຫັດຖະກຳເຂົ້າຕື່ມ

.

3.2.5 ການເຊື່ອມໂຍງກັບແຫ່ງທ່ອງທ່ຽວອື່ນໆ

ອຸທິຍານແຫ່ງທ່ອງ ທ່ຽວທຳມະຊາດນ້ຳຕົກຕາດກວາງຊີ ເປັນແຫ່ງທ່ອງທ່ຽວໜຶ່ງທີ່ມີຊື່ສຽງຂອງ ແຂວງຫຼວງພະບາງ, ມີທີ່ຕັ້ງຫ່າງຈາກເທດສະບານເມືອງຫຼວງພະບາງໄປທາງທິດໃຕ້ ປະມານ 30 ກິໂລແມັດ. ການເຂົ້າເຖິງແມ່ນມີຄວາມສະດວກສະບາຍຂອງນັກທ່ອງທ່ຽວທັງພາຍໃນແລະຕ່າງປະເທດ,ຈຸດເດັ່ນຂອງແຫຼ່ງ ທ່ອງທ່ຽວນີ້ແມ່ນຄວາມງາມຂອງທຳມະຊາດສາມາດເວົ້າໄດ້ວ່າເປັນອ່າງອາບນ້ຳທີ່ສວຍງາມທີ່ສຸດແຫ່ງໜຶ່ງໃນ ອາຊີ.ແຫຼ່ງທ່ອງທ່ຽວທຳມະຊາດມີການເຊື່ອມໂຍ່ງກັບບັນດາບ້ານທີ່ເປັນເສັ້ນທາງຍ່າງຂອງນັກທ່ອງທ່ຽວທີ່ມີຈຸດ ໝາຍປາຍທາງຕິດຕໍ່ເຊື່ອມໂຍງກັບແຫຼ່ງທ່ອງທ່ຽວແຫ່ງນີ້ໄດ້2ເສັ້ນທາງເຊັ່ນ: 1. ເມືອງຫຼວງພະບາງ - ບ້ານ

ລ້ອງເລົາ1ແລະ 2 ປະມານ 1 ຊົ່ວໂມງ, ແລະຍ່າງຕໍ່ຈາກບ້ານລ້ອງເລົາ 2 ຫານ້ຳຕົກຕາດກວາງຊີໃຊ້ເວລາ 3-4 ຊົ່ວໂມງ. 2.ຂີ່ລົດຈາກບ້ານຖິ່ນຊົມຫາບ້ານໜອງແຫ້ວໃຊ້ເວລາ 30 ນາທີ. ແລະຍ່າງຈາກບ້ານໜອງ ແຫ້ວຫາບ້ານລ້ອງເລົາໃຊ້ເວລາ 03 ຊົ່ວໂມງກໍ່ສາມາດໄປເຖິງແຫຼ່ງທ່ອງທ່ຽວນີ້ໄດ້.

3.2.6 ຕະຫຼາດນັກທ່ອງທ່ຽວ

ຕະຫຼາດທ່ອງທ່ຽວທີ່ສຳຄັນຂອງ ແຂວງຫວງພະບາງ ແມ່ນຈາກຂົງເຂດອາຊີ-ປາຊີຟິກໂດຍ ຄື: ຈີນ, ສ.ເກົາຫຼີ ແລະ ໄທ, ນອກຈາກນັ້ນຍັງມີນັກທ່ອງທ່ຽວທີ່ມີລາຍຈ່າຍສູງຈາກເອີລົບແລະອາເມລິກາ ເຊັ່ນ: ຝຣັ່ງ, ອັງກິດ, ອາເມລິກາແລະເຢຍລະມັນ.

ຫຼວງພະບາງ-ເມືອງມໍລະດົກໂລກໄດ້ຮັບລາງວັນ ເມືອງທ່ອງທ່ຽວຍອດນິຍົມທີ່ສຸດໃນໂລກ ໃນ ໄລຍະ 7 ປີຊ້ອນ (2006, 2007, 2008, 2010, 2011, 2012 ແລະ 2015) ຊຶ່ງເປັນລາງວັນອັນດັບ 1 ຈາກອາລະສານວັນເດີລັດສ໌, ປະເທດອັງກິດ.

ຕາຕະລາງທີ1: ຈຳນວນນັກທ່ອງທ່ຽວທີ່ເຂົ້າມາທ່ຽວ*ແຂວງ*ຫວງພະບາງປີ 2010-2014

ຊື່ແຂວງ	2010	2011	2012	2013	2014
ແຂວງຫວງພະບາງ	210,783	274,506	294,213	342,611	370,324

ກຸ່ມນັກທ່ອງທ່ຽວທີ່ເດີນທາງໄປທ່ຽວຊົມນ້ຳຕົກຕາກວາງຊີໃນໄລຍະແຕ່ປີ 2010 ຫາປີ 2015 ຜ່ານມາມີ ທັງນັກທ່ອງທ່ຽວພາຍໃນ ແລະ ນັກທ່ອງທ່ຽວສາກົນ. ນັກທ່ອງທ່ຽວພາຍໃນສ່ວນຫຼາຍ ແມ່ນນັກທ່ອງ ທ່ຽວ

ທີ່ມາຈາກແຂວງອື່ນໆ ໂດຍມີຈຸດປະສົງມາທ່ອງທ່ຽວສະເພາະ ແລະ ມາປະຊຸມສຳມະນາ ຈາກແຂວງຕ່າງໆ*(ພະນັກງານ).ສ່ວນນັກທ່ອງທ່ຽວສາກົນທີ່ມາທ່ຽວຊົມຕາດກວາງຊີແມ່ນມີທັງເດີນທາງ ມາເອງ ແລະ ມາແບບຄະນະ (ກຸ່ມ)* ເດີນທາງມາຈາກປະເທດ: ເຢຍລະມັນ, ຝະລັ່ງ, ຟິ່ນແລນ, ອິດສະຕາລີ , ສະວິດເຊີແລນ, ອາເມລິກາ, ການາດາ ແລະ ອື່ນໆ. ນັກທ່ອງທ່ຽວທີ່ເດີນທາງມາເອງສ່ວນ ໃຫຍ່ແມ່ນ ເດີນທາງດ້ວຍລົດຈັກ ຫຼື ລົດຖີບ. ນອກຈາກນີ້, ນັກທ່ອງທ່ຽວກຸ່ມດັ່ງກ່າວຍັງມາໂດຍຜ່ານ ບໍລິສັດທ່ອງທ່ຽວມາເປັນຄະນະ ແລະ ມີພະນັກງານ ນຳທ່ຽວເປັນຜູ້ນຳທ່ຽວ.

ສາຍເຫດທີ່ພາໃຫ້ນັກທ່ອງທ່ຽວເພີ່ມຂຶ້ນໃນແຕ່ລະປີແມ່ນຍ້ອນມີການຮ່ວມມືທາງດ້ານການທ່ອງທ່ຽວໃນອານຸພາກພື້ນແລະໄດ້ມີການປັບປຸງເສັ້ນທາງເຂົ້າເຖິງແຫຼ່ງທ່ອທ່ຽວ ທີ່ສະດວກສະບາຍເປັນຕົ້ນໄດ້ມີການ ຂະຫຍາຍເສັ້ນທາງຂອງສາຍການບິນຈາກ ສປຈີນ ແລະສປເກົາຫຼີໃຕ້ແລະມີການຂະຫຍາຍສາຍການບິນ ຈາກປະເທດໄທ ແລະ ສາຍການບິນຫວຽດນາມທີ່ສາມາດເຮັດໃຫ້ນັກທ່ອງທ່ຽວສາມາດເລືອກການ ເດີນທາງໄດ້ຫຼາຍທາງເລືອກໃນການເດີນທາງດ້ວຍການເດີນທາງທີ່ສະດວກດັ່ງກ່າວມານີ້ມາໃນປີ 2014-2015 ຈຶ່ງເຮັດຕົວເລກນັກທ່ອງທ່ຽວຈາກປະເທດໄທແລະ ສປ ຈີນ ເພີ່ມຂຶ້ນ 40% ໃນແຕ່ລະປີ (ຕົວເລກ ຄາດຄະເນ). ນັກທ່ອງທ່ຽວສາກົນທີ່ມາທ່ຽວແຂວງຫຼວງພະບາງເມືອງມໍລະດົກໂລກ ສ່ວນຫຼາຍແມ່ນມີຈຸດ ປະ ສົງມາທ່ຽວຊົມແຫຼ່ງທ່ອງທ່ຽວທາງວັດທະນະທຳ ແລະ ທ່ຽວຊົມວິຖີການດຳລົງຊີວິດຂອງ ຊາວຫຼວງພະ ບາງແລະທີ່ວທັດທຳມະຊາດທີ່ສວຍງາມຂອງຕົວເມືອງຈຶ່ງເຮັດໃຫ້ຫຼວງພະບາງໄດ້ຮັບການຄັດເລືອກເປັນ ເມືອງທ່ອງທ່ຽວຍອດນິຍົມແຫ່ງການທ່ອງທ່ຽວຂອງໂລກອັນດັບ 01 ໃນປີ 2015.

ຕາຕະລາງຕົວເລກຈຳນວນນັກທ່ອງທ່ຽວໃນແຕ່ລະປີ

ສະຖິຕິນັກທ່ອງທ່ຽວເຂົ້າຊົມຕາດກວາງຊີ ເລີ່ມແຕ່ປີ 2010-2015

ປີ	ນັກທ/ທ ພາຍໃນ	ນັກ ທ/ທ ສາກົນ	ລວມທັງຫມົດ	ເປັນເງິນກີບ	ໝາຍເຫດ
2007	*31.419*	*47.557*	*78.976*	*1.265.330.000*	
2008	*36.000*	*87.804*	*123.804*	*2.118.080.000*	
2009	*42.719*	*104.491*	*147.210*	*2.517.010.000*	
2010	*52.539*	*111.049*	*163..588*	*2.746.370.000*	
2011	*44.466*	*110.359*	*154.825*	*2.561.840.000*	

2012	*51.046*	*122.491*	*173.537*	*2.960.280.000*	
2013	*58.753*	*138.439*	*197.192*	*3.356.310.00*	
2014	*70.217*	*145.652*	*215.869*	*3.615.210.000*	
3ເດືອນ/2015	*14.259*	*47.794*	*62.053*	*1.098.470.000*	
ລວມທັ້ງໝົດ	***401.418***	***915.636***	***1.317.054***	***22.326.900.000***	

III . ການວິເຄາະຈຸດດີ, ຈຸດອ່ອນໂອກາດ ແລະ ສິ່ງທ້າທາຍ (SWOT Analysis)

ຈາກຜົນການສຶກສາຂໍ້ມູນເບື້ອງຕົ້ນ ພວກເຮົາສາມາດວິເຄາະຈຸດດີ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍ ໃນການພັດທະນາແຫຼ່ງທ່ອງທ່ຽວອຸທະຍານນ້ຳຕົກຕາດກວາງຊີ ໄດ້ດັ່ງນີ້ :

ຈຸດດີ	ຈຸດອ່ອນ
- ປະຊາຊົນມີລາຍຮັບຈາກການບໍລິການ ແລະ ການຂາຍເຄື່ອງຫັດຖະກຳ - ເສັ້ນທາງສະດວກສະບາຍ ແລະ ມີພື້ນຖານໂຄງ ລ່າງ ເຊັ່ນ: ໄຟຟ້າ, ໂທລະຄົມມະນາຄົມ, ລະບົບນ້ຳ ປະປາ. ມີໂຮງຮຽນ 3 ຫຼັງ, ສຸກສາລາ 2 ຫຼັງ ແລະ ວັດ - ທຸກຄອບຄົວມີວິດຖ່າຍກວມ 95% - ມີລົດບໍລິການຂົນສົ່ງຂີ້ເຫຍື້ອ - ມີຄວາມສະຫງົບປອດໄພ - ປະຊາຊົນພາຍໃນບ້ານມີການອະນຸລັກ, ປົກປັກ ຮັກສາຮີດຄອງປະເພນີ ແລະ ມີຄວາມສາມັກຄີ - ແຫຼ່ງທ່ອງທ່ຽວທີ່ຍັງຄົງຮັກສາສະພາບແວດລ້ອມ ທາງມະຊາດໄດ້ຢ່າງສົມບູນ - ມີກິດຈະກຳທີ່ດຶງດູດຄວາມສົນໃຈຂອງນັກທ່ອງ ທ່ຽວ ເປັນຈຳນວນຫຼາຍຫຼວງ. - ໄດ້ຖືກກຳນົດເປັນໜຶ່ງໃນຜະລິດຕະພັນທ່ອງທ່ຽວ ທາງທຳມະຊາດຂອງອາຊຽນ.	- ພື້ນຖານໂຄງລ່າງທີ່ຈຳເປັນ ແລະ ການບໍລິການດ້ານ ຕ່າງໆພາຍໃນ ຍັງບໍ່ທັນເປັນລະບົບເທົ່າທີ່ຄວນ. - ສິ່ງສັກສິດໃນແຫລ່ງທ່ອງທ່ຽວ ຍັງບໍ່ທັນໄດ້ຮັບການ ບູລະນະ ແລະ ປົກປັກຮັກສາເທົ່າທີ່ຄວນ ເຊັ່ນ: ບ່ອນ ສັກກະລະບູຊາ, ພະພຸດທະຮູບພາຍໃນຖ້ຳ. - ເສັ້ນທາງຍ່າງພາຍໃນນ້ຳຕົກຕາດ (ພາຍໃນແຫຼ່ງທ່ອງ ທ່ຽວ) ຍັງມີຄວາມຫຍຸ້ງຍາກຫຼາຍຈຸດ ເປັນຕົ້ນແມ່ນ ຍາມຝົນ ເສັ້ນທາງມື່ນຫຼາຍຈຸດ. - ຫ້ອງຂໍ້ມູນການທ່ອງທ່ຽວຍັງຈຳກັດດ້ານຂໍ້ມູນ,ຈຸດຊົມ ວິວ ແລະ ປ້າຍຫ້າມ ແລະ ປ້າຍຊີ້ບອກຕ່າງໆຍັງບໍ່ມີ ການກໍ່ສ້າງ ແລະ ຕິດຕັ້ງ. - ຫ້ອງນ້ຳຍັງຈຳກັດ ແລະ ບໍ່ໄດ້ມາດຕະຖານ - ການຈັດສັນສະຖານທີ່ຈອດລົດ, ຮ້ານອາຫານຍັງບໍ່ ເປັນລະບົບ ແລະ ລະບົບບຳບັດນ້ຳເສຍໃນກໍລະນີມີ ການຂະຫຍາຍຕົວໃນອານາຄົດ. - ຍັງບໍ່ມີລະບົບປ້ອງກັນການເຊາະເຈື່ອນຂອງວັງນ້ຳ ຕົກຕາດ - ບໍ່ມີພະນັກງານນຳທ່ຽວຂັ້ນບ້ານ ແລະ ກິດຈະກຳການ

	ທ່ອງທ່ຽວຍັງຈຳກັດ - ການອອກຂໍ້ກຳນົດຕ່າງໆ ຍັງບໍ່ທັນຮັດກຸມເທົ່າທີ່ຄວນ
ໂອກາດ	**ສິ່ງທ້າຍທາຍ**
ອຳນາດການປົກຄອງແຂວງຫຼວງພະບາງ ເຫັນຄວາມສຳຄັນຂອງການພັດທະນາແຫຼ່ງທ່ອງທ່ຽວດັ່ງກ່າວ. ການປັບປຸງສິ່ງອຳນວຍຄວາມສະດວກຕ່າງໆພາຍໃນແຫຼ່ງທ່ອງທ່ຽວເຮັດໃຫ້ປະຊາຊົນໃນເຂດໃກ້ຄຽງໄດ້ຮັບຜົນປະໂຫຍດນຳ. ຜົນຂອງການສຳຫຼວດ ແລະ ຈັດ ສັນກຳນົດເຂດແຫຼ່ງທ່ອງທ່ຽວ ຈະເປັນເອກະ ສານພື້ນຖານ ເພື່ອເປັນບ່ອນອີງ ໃຫ້ ແກ່ການພັດທະນາ ແລະ ຄຸ້ມ ຄອງ ການທ່ອງທ່ຽວໃຫ້ມີຄວາມຄ່ອງຕົວ ແລະ ມີ ຄວາມ ເປັນລະບຽບຮຽບຮ້ອຍດີ. - ຈະເປັນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນທ້ອງຖິ່ນ ແລະ ເປັນສ້າງລາຍຮັບເພີ່ມຈາກການທ່ອງທ່ຽວ. ສາມາດພັດທະນາໃຫ້ເປັນວົງຈອນທ່ອງທ່ຽວເຊື່ອມຕໍ່ກັບຕາດແສ້ ແລະ ຖ້ຳຕ່ຶງ ແນ່ໃສ່ດຶງ ດູດນັກທ່ອງທ່ຽວມາທ່ຽວຫຼວງພະບາງເພີ່ມຂຶ້ນ. ນອກຈາກນັ້ນຍັງ ສາມາດ ເຊື່ອມຕໍ່ກັບບັນດາແຫຼ່ງທ່ອງທ່ຽວຂອງບັນດາ ແຂວງພາກເໜືອ ແລະ ປະເທດເພື່ອນບ້ານ. - ໂອກາດເປັນແຫຼ່ງສຶກສາຄົ້ນຄວ້າລະບົບນິເວດ, ຊີມ ສັດປ່າ ແລະ ພືດພັນຊະນິດຕ່າງໆ - ສາມາດສ້າງລາຍການທ່ອງທ່ຽວຫຼາຍຮູບແບບ, ຫຼາຍ ກິດຈະກຳເປັນຕົ້ນຮູບແບບ ການທ່ອງທ່ຽວອະນຸລັກ ປະຊາຊົນມີສ່ວນ ຮ່ວມ. - ມີຄວາມສົມບູນຂອງລະບົບນິເວດ, ສະພາບບໍລິເວນ ອ້ອມຮອບນ້ຳຕົກມີຄວາມຮົ່ມເຢັນເໝາະສົມແກ່ການພັກຜ່ອນ - ມີພະນັກງານຮັກສາຄວາມປອດໄພເບິ່ງແຍງນັກທ່ອງທ່ຽວ	- ແຫຼ່ງທ່ອງທ່ຽວດັ່ງກ່າວ ຍັງບໍ່ທັນໄດ້ຮັບການຈັດສັນ ແລະ ກຳນົດເຂດທີ່ຊັດເຈນ ເພື່ອໃຫ້ສອດຄ່ອງກັບ ແຜນພັດທະນາການທ່ອງທ່ຽວ. - ເຂດແຫຼ່ງທ່ອງທ່ຽວດັ່ງກ່າວ ນອນໃນເຂດອຸດທະຍານ ຊຶ່ງມີປ່າໄມ້ຕົບຫນາ ແລະ ມີຕົ້ນໄມ້ລາຄາແພງຈຳນວນ ຫຼວງຫຼາຍ ຖ້າການຄຸ້ມຄອງບໍ່ດີ ອາດມີຜູ້ຄົນບໍ່ຫວັງດີ ເຂົ້າໄປລັກລອບຕັດໄມ້ທຳລາຍປ່າ ຊຶ່ງຈະເຮັດໃຫ້ເນື້ອທີ່ຂອງປ່າໄມ້ຫຼຸດລົງ ມີຜົນກະທົບເຖິງສະພາບແວດລ້ອມ ແລະ ຊີວະນາໆພັນ ທີ່ອາໄສຢູ່ເຂດດັ່ງກ່າວ. - ອາດຈະມີການແຂ່ງຂັນກັບແຫລ່ງທ່ອງທ່ຽວອື່ນທີ່ມີສິ່ງອຳນວຍຄວາມສະດວກດີກວ່າ.

IV. ທິດທາງໃນການພັດທະນາແຫຼ່ງທ່ອງທ່ຽວ

1. ວິໄສທັດ, ເປົ້າຫມາຍ ແລະ ຈຸດປະສົງ

ວິໄສທັດ

ພັດທະນາແຫ່ງທ່ອງທ່ຽວທໍາມະຊາດຕາດກວາງຊີ ໃຫ້ກາຍເປັນອຸທິຍານນ້ໍາຕົກຕາດທີ່ໂດດເດ່ນໃນລະດັບພາກພື້ນ ແລະ ລະດັບໂລກ, ປັບປຸງສິ່ງອໍານວຍຄວາມສະດວກ ແລະ ການບໍລິການໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານ, ປົກປັກຮັກສາຄວາມອຸດົມສົມບູນທາງດ້ານສິ່ງແວດລ້ອມ ສົ່ງເສີມການມີສ່ວນຮ່ວມລະຫວ່າງ ພາກລັດ, ປະຊາຊົນທ້ອງຖິ່ນ ແລະ ພາກທຸລະກິດ

ເປົ້າຫມາຍ

ຈັດສັນແບ່ງເຂດພາຍໃນແຫ່ງທ່ອງທ່ຽວນ້ໍາຕົກຕາດກວາງຊີ , ກໍານົດແນວຄວາມຄິດໃນການປັບປຸງ ແລະ ພັດທະນາສິ່ງອໍານວຍຄວາມສະດວກພາຍໃນ ເພື່ອອໍານວຍຄວາມສະດວກແກ່ນັກທ່ອງທ່ຽວ . ຊຸກຍູ້ການມີສ່ວນຮ່ວມຂອງພາກລັດ, ປະຊາຊົນທ້ອງຖິ່ນ ແລະ ພາກທຸລະກິດ ປະກອບສ່ວນເຂົ້າໃນການ ສ້າງວຽກເຮັດງານທໍາ, ສ້າງລາຍຮັບໃຫ້ປະຊາຊົນທ້ອງຖິ່ນ

ຈຸດປະສົງ:

ເພື່ອພັດທະນາແຫ່ງທ່ອງທ່ຽວນ້ໍາຕົກຕາດກວາງຊີ ໃຫ້ກາຍເປັນຈຸດຫມາຍປາຍທາງການທ່ອງທ່ຽວທີ່ໂດດເດ່ນໃນລະດັບພາກພື້ນ ແລະ ລະດັບໂລກ . ເພື່ອບັນລຸເປົ້າໝາຍດັ່ງກ່າວຂ້າງເທິງນີ້ມີຄວາມຈໍາເປັນຕ້ອງໄດ້ກໍານົດບັນດາແຜນງານ ແລະ ໂຄງການທີ່ຕ້ອງປະຕິບັດໃນຕໍ່ໜ້າໂດຍການມີສ່ວນຮ່ວມຈາກພາກສ່ວນຕ່າງໆ.

2. ການກໍານົດແບ່ງເຂດພາຍໃນແຫ່ງທ່ອງທ່ຽວ

ເຂດແຫ່ງທ່ອງທ່ຽວສວຍອຸທິຍານນ້ໍາຕົກຕາດກວາງຊີ ແບ່ງອອກເປັນ 3 ເຂດຄື: ເຂດອະນຸລັກ, ເຂດສະຫງວນ ແລະ ເຂດບໍລິການ. ລາຍລະອຽດຂອງແຕ່ປະເຂດປະກອບມີດັ່ງນີ້:

ແຜນທີ່ແບ່ງເຂດ





ເຂດອະນຸລັກ

ແມ່ນເຂດທີ່ບໍ່ອະນຸຍາດໃຫ້ມີການປຸກສ້າງສິ່ງອຳນວຍຄວາມສະດວກດ້ານຕ່າງ ໆ ແຕ່ສາມາດປັບປຸງບລະນະໄດ້ຊ່ວນ: ການອະນາໄມສິ່ງກີດຂວາງ ເພື່ອອະນຸລັກເຂດດັ່ງກ່າວໃຫ້ຢູ່ໃນສະພາບເດີມ ແລະ ຍັງຮັກສາຄວາມສວຍງາມຂອງທຳມະຊາດໃນເຂດດັ່ງກ່າວ. ນອກຈາກນີ້, ຢູ່ບໍລິເວນພາຍ ໃນເຂດອະນຸລັກ

ຍ້ງສາມາດດັດປັບພື້ນທີ່ໄດ້ ເພື່ອໃຫ້ມີຄວາມສະດວກສະບາຍກ່ວ ໆເກົ່າເຊ່ນ: ປັບພື້ນທີ່ຫ້ນ ໆດິນ ໃຫ້ສາ ມາດຍ່າງ ຫຼື ເດີນທາງໄປ-ມາໄດ້ສະດວກກ່ວ ໆເກົ່າ. ເຂດອະນຸລັກ ລວມມີເນື້ອທີ່ທັງໝົດ **0,6 ha**

ເຂດສະຫງວນ:

ແມ່ນເຂດທີ່ສະຫງວນເອ ໆໄວ້ສ ໍ ລັບພັດທະນ ໆກິດຈະກ ໍ າໃດໜຶ່ງສະເພ າະ. ໃນເຂດນີ້ແມ່ນສາ ມາດປັບປຸງ ແລະ ກ ໍ ່ສ ້ າງ ີ ່ສ ງ ອ ໍ ານວຍຄວາມສະດວກໄດ ້ ແ ່ ຕ ້ ອ ງ ໄ ້ ດ ມ ີ ກ ານອອກແບບ ໃ ້ ກ ມ ີ ກ ານ ຮ ັ ກ ສ ານ ທ ໍ າ ມ ະ ຊ າ ດ ແລະ ິ ່ ສ ງ ແ ວ ດ ລ ້ ອ ມ. ເ ຂ ດ ສ ະ ຫ ງ ວ ນ ມ ີ ເ ນ ື ້ ອ ທ ີ ່ ທ ັ ງ ໝ ົ ດ **9,4** ເ ຮ ັ ກ ຕ ໆ. ໃ ນ ນ ີ ້ ແ ມ ່ ນ ລ ວ ມ ເ ອ ົ າ ເ ຂ ດ . ດ ້ ານ ໃ ນ ປ ະ ຕ ູ ໂ ຂ ງ ຈ ັ ດ ສ ັ ນ ອ ອ ກ ແ ບ ບ ພ ື ້ ນ ທ ີ ່ ຄ ຶ ນ ໃ ໝ ່ ແ ລ ະ ປ ັ ບ ປ ຸ ງ ສ ະ ຖ ານ ທ ີ ່ ຈ ອ ດ ລ ົ ດ VIP, ປ ັ ບ ປ ຸ ງ ຫ ້ ອ ງ ນ ໍ ້ າ ສ າ ທ າ ລ ະ ນ ະ, ກ ໍ ່ ສ ້ າ ງ ສ ັ ນ ຍ າ ລ ັ ກ ທ າ ງ ເ ຂ ົ ້ າ, ສ ວ ນ ດ ອ ກ ໄ ມ ້ , ບ ່ ອ ນ ນ ັ ່ ງ ຫ ີ ນ ດ ້ ານ ໃ ນ ແ ຫ ຼ ່ ງ ທ ່ ອ ງ ທ ່ ຽ ວ .

ເຂດບໍລິການ:

ແມ່ນເຂດທີ່ສາມາດປຸກ ້ ສ ້ າ ງ ີ ່ ສ ງ ອ ໍ ານ ວ ຍ ຄ ວ າ ມ ສ ະ ດ ວ ກ ດ ້ ານ ຕ ່ າ ງ ໆ ໄ ດ ້ ແ ຕ ່ ກ ານ ອ ອ ກ ແ ບ ບ ີ ່ ສ ງ ປຸ ກ ້ ສ ້ າ ງ ໃ ນ ເ ຂ ດ ດ ັ ່ ງ ກ ່ າ ວ ~ ຕ ~ ອ ງ ມ ີ ຄ ວ າ ມ ກ ົ ມ ກ ຽ ວ ກ ັ ບ ສ ະ ພ າ ບ ທ າ ງ ທ ໍ າ ມ ະ ຊ າ ດ ແ ລ ະ ~ ~ ຕ ~ ~ ອ ງ ~ ~ ີ ~ ~ ~

ເອົາຮູບພາບ ແລະ ແຜນທີ່ເຂດບໍລິການໃສ່

3. ການກຳນົດກິດຈະກຳພາຍໃນແຫ່ງທ່ອງທ່ຽວ

3.1 ກິດຈະກຳພາຍໃນແຫລ່ງທ່ອງທ່ຽວ

ແຫ່ງທ່ອງທ່ຽວທຳມະຊາດນ້ຳຕົກຕາດກວາງຊີ ເປັນແຫ່ງທ່ອງທ່ຽວທີ່ບໍ່ຫ່າງໄກຈາກເທດສະບານແຂວງຫຼວງພະບາງ. ນັກທ່ອງທ່ຽວສ່ວນໃຫຍ່ແມ່ນນັກທ່ອງທ່ຽວ ທີ່ມາຕາມລາຍການທ່ອງທ່ຽວທີ່ບໍລິສັດທ່ອງທ່ຽວໄດ້ສ້າງລາຍການໄວ້ຮຽບຮ້ອຍແລ້ວ. ນອກນັ້ນກໍຍັງມີນັກທ່ອງທ່ຽວອິດສະຫຼະ ຊຶ່ງສາມາດສ້າງກິດຈະກຳການທ່ອງທ່ຽວຫຼາຍຢ່າງ ເພື່ອໃຫ້ນັກທ່ອງທ່ຽວມີຫຼາຍທາງເລືອກ ແລະ ນຳໃຊ້ການບໍລິການຕື່ມອີກເຊັ່ນ:

- ການຍ່າງປ່າຊົມຄວາມສວຍສົດງົດງາມຂອງທຳມະຊາດ.
- ການລົງໍ້ໜ້ຳ, ອາບນ້ຳ ຢ່ວ້ອງອາບນ້ຳ
- ການຍ່າງ ຫຼື ຂີ່ລົດຖີບຊົມວິຖີການດຳລົງຊີວິດຕາມບ້ານວັດທະນະທຳ.
- ທ່ຽວຊົມແຫ່ງທ່ອງທ່ຽວທຳມະຊາດ: ຖ້ຳອອກຮູ, ນ້ຳອອກບໍ່ (ຫ້ວຍຕາດກວາງຊີ)
- ການບໍລິການອາຫານ, ເຄື່ອງດື່ມ ແລະ ອາຫານທີ່ປຸງແຕ່ງຈາກຜັກປອດສານພິດ.
- ການນອນພັກແຮມນຳເຮືອນປະຊາຊົນ ແລະ ກິດຈະກຳກິນເຂົ້າປ່າ
- ກິດຈະກຳທ່ຽວຊົມແມງກະເບື້ອ ແລະ ບໍລິການຂາຍຜະລິດຕະພັນກະສິກຳ ແລະ ຫັດຖະກຳຕ່າງໆຂອງຊາວບ້ານ.

4. ແຜນງານ ແລະ ໂຄງການພັດທະນາແຫລ່ງທ່ອງທ່ຽວ

ແຜນງານທີ 1: ແຜນງານຈັດສັນ ແລະ ຄຸ້ມຄອງພື້ນທີ່

ໂຄງການທີ 1: ໂຄງການສຳຫຼວດ, ຈັດສັນຂອບເຂດ, ປັກຫຼັກໝາຍຂອບເຂດ ແລະ ອອກໃບຕາດິນເຂດແຫ່ງທ່ອງທ່ຽວນ້ຳຕົກຕາດກວາງຊີ

ແຜນງານທີ 2: ແຜນງານສຳຫຼວດ-ອອກແບບ ແລະ ກໍ່ສ້າງສິ່ງອຳນວຍຄວາມສະດວກ

ໂຄງການທີ 1: ໂຄງການອອກແບບ ແລະ ກໍ່ສ້າງສະຖານທີ່ຈອດລົດ, ຮ້ານຂາຍເຄື່ອງທີ່ລະນຶກ, ຮ້ານອາຫານ-ເຄື່ອງດື່ມແລະຫ້ອງນ້ຳສາທາລະນະ (ໃນເຂດບໍລິການທີ 1).

ໂຄງການທີ 2: ໂຄງການອອກແບບ, ປັບປຸງສະຖານທີ່ຈອດລົດ VIP, ຫ້ອງນ້ຳສາທາລະນະ, ສັນຍາລັກທາງເຂົ້າ, ສວນດອກໄມ້, ບ່ອນນັ່ງຫີນດ້ານໃນແຫ່ງທ່ອງທ່ຽວ (ໃນເຂດບໍລິການທີ 2).

ໂຄງການທີ 3: ໂຄງການປັບປຸງເສັ້ນທາງຍ່າງພາຍໃນເຂດນ້ຳຕົກຕາດ, ເສັ້ນທາງຍ່າງ ຂຶ້ນ-ລົງ

ຫ້ວຕາດ, ຂ້ວຂ້າມຮ່ອງນ້ຳພາຍໃນ, ກໍ່ກັນເຈື່ອນຂອບໜອງປາ, ປັບປຸງບ່ອນລ້ຽງຫຼີ້ນນ້ຳ ອະນາໄມສິ່ງກີດຂວາງຢູ່ບ່ອນອະນຸຍາດໃຫ້ລ້ຽງຫຼີ້ນນ້ຳ , ບ່ອນນັ່ງຫຼີ້ນ ເຂດແຄມນ້ຳ ແລະ ຈຸດຖ່າຍຮູບໜ້ານ້ຳຕົກຕາດ.

ໂຄງການທີ 4: ໂຄງການປັບປຸງເຂດຫ້ວຕາດ ເຊັ່ນ: ທາງຍ່າງເທິງຕາດ, ສ້າງຮາວກັນຕົກ, ປັບປຸງບ່ອນໂຕະຕັ່ງນັ່ງພັກຜ່ອນ.

ໂຄງການທີ 5: ໂຄງການປັບປຸງເສັ້ນທາງຍ່າງເຊື່ອມຕໍ່ໄປຫາຖ້ຳນ້ຳອອກຮູ ແລະ ຈັດສັນພື້ນທີ່ໃຫ້ມີຄວາມສວຍງາມ.

ໂຄງການທີ 6: ໂຄງການຕິດຕັ້ງໄຟເຍືອງໃສ່ນ້ຳຕົກຕາດ ແລະ ຕາມເສັ້ ນທາງຍ່າງ ໃນຍາມຄ່ຳຄືນ.

ຮູບພາບແນວຄວາມຄິດການປັບປຸງໂຄງລ່າງພື້ນຖານ

ທາງຍ່າງຂ້າມນ້ຳເທິງຫ້ວຕາດ

ປັບປຸງລານກິດຈະກຳບໍລິເວນໃກ້ກັບຕາດ

ປັບປຸງປະຕູທາງເຂົ້າຫາຕາດບໍລິເວນລານກິດຈະກຳ

ສາລາຈຸດຊົມວິວ

ປັບປຸງລານບໍລິເວນຫຼິ້ນນ້ຳ ເພື່ອບໍ່ໃຫ້ມີ່ນ

ປັບປຸງທາງຍ່າງບໍລິເວນຈຸດຫຼິ້ນນ້ຳ

ປັບປຸງທາງຍ່າງບໍລິເວນທີ່ເປັນດິນຕ່າງລະດັບ

ສ້າງສາລາໃຫ້ນັກທ່ອງທ່ຽວເກືອປາ ບໍລິເວນອ່າງປາ

ປັບປຸງລານກິດຈະກຳບໍລິເວນໃກ້ກັບຕາດ



ປັບປຸງທາງຍ່າງຂຶ້ນໄປຫ້ອງນ້ຳ

ປັບປຸງດອນກາງ (ເຂດຫ້ວຍຕາດ) ເປັນລານໄມ້ ເພື່ອສະດວກສະບາຍ

ປັບປຸງຂົວ ແລະ ຫາວກັ້ນຕົກເຂດຫ້ວຍຕາດ

ປັບປຸງກະດານຂໍ້ມູນກ່ຽວກັບຕາດກວາງຊີ

ປັບປຸງຂັ້ນໄດຂຶ້ນໄປຫ້ວຍຕາດ

ປັບປຸງຂໍ້ອ້າມໄປຫາຕາດ

ປັບປຸງໂຕະ-ຕັ່ງບໍລິເວນຈຸດນັ່ງພັກຜ່ອນ

ປັບປຸງຂໍ້ອ້າມໄປຫາຕາດ

ປັບປຸງຕັ່ງນັ່ງ ໃນເຂດພັກຜ່ອນ

ແຜນງານທີ 3: ແຜນງານປັບປຸງ ແລະ ພັດທະນາກິດຈະກຳການທ່ອງທ່ຽວພາຍໃນ

ໂຄງການທີ 1: ໂຄງການຍົກຍ້າຍຈັດສັນຄອກຫມີ ໄປຢູ່ພື້ນທີ່ອື່ນນອກເຂດຕາດກວາງຊີ

ໂຄງການທີ 2: ໂຄງການສະແດງສິລະປະວັນນະຄະດີຂອງທ້ອງຖິ່ນ ໃນທຸກໆມື້, ມື້ໜຶ່ງຈັດ 2 ຄັ້ງ (ຕອນເຊົ້າສະແດງເວລາ 10:00-10:30ໂມງ ແລະ ຕອນສວຍສະແດງ ເວລາ 15:00-15:30ໂມງ).

ໂຄງການທີ 3: ກິດຈະກຳຍ່າງປ່າພາຍໃນຂອບເຂດນ້ຳຕົກຕາດ, ທ່ຽວຊົມວິຖີການດຳລົງຊີວິດ ຂອງປະຊາຊົນບ້ານທ່າແປ້ນ, ແລະ ຍ່າງທ່ຽວຊົມທຳມະຊາດເຊື່ອມຕໍ່ກັບແຫຼ່ງ ທ່ອງທ່ຽວອື່ນ.

ໂຄງການທີ 4: ສ້າງໃຫ້ມີກິດຈະກຳສາທິດການຜະລິດເຄື່ອງຫັດຖະກຳ ແລະ ແກະສະລັກ ຂອງຊາວບ້ານ.

ແຜນງານທີ 4: ແຜນງານປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນາໆພັນ

ໂຄງການທີ 1: ໂຄງການປູກຈິດສຳນຶກການປົກປັກຮັກສາສິ່ງແວດລ້ອມ ແລະ ການບໍລິຫານ ພາຍໃນນ້ຳຕົກຕາດ

ໂຄງການທີ 2: ໂຄງການປູກດອກເອື້ອງປ່າ ແລະ ດອກໄມ້ປ່ານາໆຊະນິດຢູ່ເທິງຫ້ວຍຕາດ

ໂຄງການທີ 3: ໂຄງການປຸກລະດົມການປູກຕົ້ນໄມ້ເນື້ອແຂງໃຫ້ເປັ ນປ່າ ແລະ ປູກຕົ້ນໄມ້ປະດັບ ໃຫ້ມີຄວາມສວຍງາມ (ນັກທ່ອງທ່ຽວ 1 ຄົນ/1ຕົ້ນ, one tourist one tree). ໂດຍຕິດຊື່ນັກທ່ອງທ່ຽວໃສ່ສຳລັບຕົ້ນໄມ້ເນື້ອແຂງ ເພື່ອດຶງດູດໃຫ້ນັກທ່ອງທ່ຽວ ກັບມາເບິ່ງຕົ້ນໄມ້ທີ່ນັກທ່ອງທ່ຽວປູກໄວ້.

ໂຄງການທີ 4: ໂຄງການເກັບມ້ຽນສິ່ງເສດເຫຼືອ ແລະ ກຳຈັດຂີ້ ເຫຍື້ອ ໂດຍການຈັດວາງກະຕ່າຂີ້ ເຫຍື້ອໄວ້ຢູ່ແຕ່ລະຈຸດໃຫ້ພຽງພໍ .

ແຜນງານທີ 5: ແຜນງານໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວ

ໂຄງການທີ 1: ໂຄງການອອກແບບ ແລະ ປັບປຸງຫ້ອງຂໍ້ມູນຂ່າວສານໃຫ້ເປັນລະບົບ

ໂຄງການທີ 2: ໂຄງການອອກແບບ ແລະ ຜະລິດສິ່ງພິມໂຄສະນາກ່ຽວກັບນ້ຳຕົກຕາດກວາງຊີ ສະຫນອງຢູ່ຫ້ອງຂໍ້ມູນຂ່າວສານ ເຊັ່ນ ແຜນທີ່ພາຍໃນນ້ຳຕົກຕາດ, ແຜນທີ່ເສັ້ນ ທາງເຊື່ອມຕໍ່ກັບຫມູ່ບ້ານໃກ້ຄຽງ ເພື່ອສ້າງເປັນວົງຈອນການທ່ອງທ່ຽວ,ແຜ່ນພັບ ແລະ ອື່ນໆ.

ໂຄງການທີ 3: ໂຄງການຜະລິດສາລະຄະດີແຫຼ່ງທ່ອງທ່ຽວນ້ຳຕົກຕາດກວາງຊີ ເພື່ອແຈກຢາຍໃນ

ງານວາງສະແດງ ຢູ່ພາຍໃນ ແລະ ຕ່າງປະເທດ

ໂຄງການທີ 4: ໂຄງການອອກແບບ ແລະ ຕິດຕັ້ງກະດານແຜນທີ່ແຫຼ່ງທ່ອງທ່ຽວ ໃສ່ທາງເຂົ້າ ເບື້ອງຂວາດ້ານໃນປະຕູທາງເຂົ້າ

ໂຄງການທີ 5: ໂຄງການຕິດຕັ້ງປ້າຍຊີ້ບອກຈຸດຕ່າງໆພາຍໃນ ປ້າຍຊີ້ບອກເສັ້ນທາງ ປ້າຍຊື່ຕົ້ນໄມ້, ປ້າຍເຕືອນອັນຕະລາຍ ປ້າຍຫ້າມ ແລະ ອື່ນໆ ຂໍ້ແນະນຳ: ສີຂອງປ້າຍຕ້ອງແມ່ນພື້ນສີຕັບໝູ

ແຜນງານທີ 6: ແຜນງານພັດທະນາບຸກຄະລາກອນ

ໂຄງການທີ 1: ໂຄງການຝຶກອົບຮົມກ່ຽວກັບການຄຸ້ມຄອງແຫຼ່ງທ່ອງທ່ຽວໃຫ້ຜູ້ບໍລິຫານ , ຄຸ້ມຄອງ ແລະ ຜູ້ປະກອບການຢູ່ຕາດກວາງຊີ.

ໂຄງການທີ 2: ໂຄງການຈັດທັດສະນະສຶກສາໄປຖອດຖອນບົດຮຽນຢູ່ພາຍໃນ ແລະ ຕ່າງປ ະ ເທດ ໃຫ້ແກ່ຄະນະຮັບຜິດຊອບ , ຜູ້ບໍລິຫານຄຸ້ມຄອງ ແລະ ຜູ້ປະກອບການຕາດ ກວາງຊີ.

ໂຄງການທີ 3: ໂຄງການຝຶກອົບຮົມກ່ຽວກັບຮ້ານອາຫານສະອາດ ແລະ ປອດໄພ , ການປຸງແຕ່ງ ອາຫານໃຫ້ຖືກຫຼັກສຸຂະອະນາໄມ ແລະ ການບໍລິການອາຫານ- ເຄື່ອງດື່ມ.

ໂຄງການທີ 4: ໂຄງການຝຶກອົບຮົມໃຫ້ຜູ້ປະກອບການທຸລະກິດ ແລະ ພະນັກງານນຳທ່ຽວກ່ຽວ ກັບການບໍລິການ, ການນຳໃຊ້ພາສາຕ່າງປະເທດ ເຊັ່ນ: ພາສາອັງກິດ, ພາສາ ຝະລັ່ງ ແລະ ພາສາຈີນ.

ໂຄງການທີ 5: ໂຄງການຝຶກອົບຮົມໃຫ້ພະນັກງານປ້ອງກັນ ແລະ ຮັກສາຄວາມປອດໄພພາຍໃນ ແຫຼ່ງທ່ອງທ່ຽວ ແລະ ຝຶກອົບຮົມກ່ຽວກັບການປະຖົມປະຍາບານຂັ້ນຕົ້ນ .

ໂຄງການທີ 6: ໂຄງການຝຶກອົບຮົມກ່ຽວກັບມາດຕະຖານຫ້ອງສາທານ້ຳສະອາດ .

ໂຄງການທີ 7: ໂຄງການຝຶກອົບຮົມກ່ຽວກັບການປົກປັກຮັກສາສິ່ງແລ້ວລ້ອມ ແລະ ພືກສານາໆ ພັນປະເພດຕ່າງໆ.

ແຜນງານທີ 7: ແຜນງານສຶກສາ, ວິໄຈ ແລະ ເກັບກຳສະຖິຕິການທ່ອງທ່ຽວ

ໂຄງການທີ 1: ໂຄງການເກັບກຳສະຖິຕິນັກທ່ອງທ່ຽວ ເຂົ້າມາທ່ຽວຊົມນ້ຳຕົກຕາດກວາງຊີ ໂດຍ ແບ່ງເປັນສັນຊາດ, ກຸ່ມໄວອາຍຸ, ແລະ ຄວາມເພິ່ງພໃຈຂອງນັກທ່ອງທ່ຽວ .

ໂຄງການທີ 2: ໂຄງການສຳຫຼວດ ແລະ ສຶກສາຄວາມເພິ່ງພໃຈຂອງນັກທ່ອງທ່ຽວ ທີ່ມາທ່ຽວຊົມ ຕາດກວາງຊີ.

5. ຜູ້ທີ່ມີສ່ວນຮ່ວມໃນການພັດທະນ(Stakeholders)

ພາກສ່ວນທີ່ກ່ຽວຂ້ອງ ຫຼືຜູ້ທີ່ມີສ່ວນຮ່ວມ	ວຽກງານພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ	ຜົນປະໂຫຍດທີ່ຈະໄດ້ຮັບ
- ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວແຂວງຫຼວງພະບາງ - ພະແນກກະສິກຳ, ປ່າໄມ້ແຂວງ, ເມືອງ -ພະແນກຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແຂວງ, ເມືອງ	-ພັດທະນາ ແລະ ຄຸ້ມຄອງແຫຼ່ງທ່ອງທ່ຽວຕາດກວ້າງຊີໃຫ້ເປັນແຫຼ່ງທ່ອງທ່ຽວທຳມະຊາດແບບຍືນຍົງ - ສ້າງກົດຈະກຳການທ່ອງທ່ຽວທຳມະຊາດ,ວັດທະນະທຳວິຖີຊີວິດຂອງປະຊາຊົນບ້ານທ່າແປ້ນ ແລະເຮັດໃຫ້ແຫຼ່ງທ່ອງທ່ຽວຕາດກວ້າງຊີກາຍເປັນບ່ອນສຶກສາຮຽນຮູ້ຂອງສະຖາບັນການສຶກສາກ່ຽວກັບຊີວະນາໆພັນເພື່ອດຶງດູດນັກທ່ອງທ່ຽວທັງພາຍໃນແລະຕ່າງປະເທດ. - ພັດທະນາເຄືອຄ່າຍຜະລິດຕະພັນການທ່ອງທ່ຽວຈາກບ້ານໃກ້ຄຽງ ເຊັ່ນ: ບ້ານລ້ອງເລົາຫານ້ຳອອກຮູ-ຕາດກວ້າງຊີ.	-ເຮັດໃຫ້ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ ເຂົ້າມາທ່ຽວຊົມແຫຼ່ງທ່ອງທ່ຽວຕາດກວ້າງຊີ ໄດ້ສຳພັດກັບກິດຈະກຳທີ່ຫຼາກຫຼາຍ ແລະທັງເປັນການສ້າງວຽກເຮັດງານທຳ, ມີລາຍໄດ້ເສີມຈາກການທ່ອງທ່ຽວທີ່ສາມາດເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການພັດທະ ນາດີຂຶ້ນເປັນກ້າວໆ. ພ້ອມທັງຍົກສູງ ບົດບາດ ຂອງພະແນກ ທ່ອງທ່ຽວແຂວງ ຖະແຫຼງຂ່າວ, ວັດທະນະ ທຳ ແລະ ທ່ອງທ່ຽວ ແຂວງຫຼວງພະ ບາງໃຫ້ນັບມື້ນັບສູງຂຶ້ນ. ນອກຈາກນີ້ຍັງສາມາດສ້າງກອງທຶນ ພັດທະນາ ການທ່ອງທ່ຽວ ຂອງບ້ານ ແລະ ກອງ ພັດທະນາດ້ານສິ່ງແວດ ລ້ອມອີກດ້ວຍ.
-ອຳນາດການປົກຄອງ ຂອງແຂວງຫຼວງພະບາງ	-ອາກອນລາຍໄດ້ຈາກການທ່ອງທ່ຽວ ແລະ ລາຍຮັບຈາກເຂົ້າຊົມຕາດກວ້າງຊີ ສາມາດຊ່ວຍໃຫ້ຊາວບ້ານມີລາຍໄດ້ເພີ່ມ, ຮັບປະກັນວ່າກິດ ຈະກຳການທ່ອງທ່ຽວມີຄວາມສອດຄ່ອງກັບນະໂຍບາຍ ແລະ ການຄຸ້ມຄອງອະນຸລັກສິ່ງແວດລ້ອມຂອງພະແນກຖະແຫຼງຂ່າວ,ວັດທະນະທຳແລທ່ອງທ່ຽວແລະຂະແໜງການກ່ຽວຂ້ອງ	

ພະແນກກະສິກຳປ່າໄມ້ ແຂວງ	ຮັບປະກັນວ່າກິດຈະກິດການທ່ອງທ່ຽວມີຄວາມສອດຄອງກັບນະໂຍບາຍ ແລະ ການຄຸ້ມຄອງອະນຸລັກ ແລະ ສະຫງວນຂອງຂະແໜງການກ່ຽວຂ້ອງ.	- ກິດຈະກຳການທ່ອງທ່ຽວ ຊ່ວຍການອະນຸລັກ ຮັກສາແຫຼ່ງນ້ຳ, ອະນຸລັກພັນປາທຳມະຊາດ, ປົກປັກຮັກສາຄວາມຊຸ່ມຊື່ນ ແລະ ຂຽວສົດງົດງາມຂອງປ່າໄມ້ໃນບໍລິເວນຕາດກວ້າງຊີໃນຈຳນວນ 16 ເຮັກຕ.
ປະຊາຊົນ ແລະ ພາກສ່ວນບຸກຄົນທີ່ເປັນເຈົ້າຂອງທີ່ດິນໃນບໍລິເວນແຫລ່ງທ່ອງທ່ຽວຕາດກວ້າງຊີ	- ການບໍລິການພັກແຮມ - ພັດທະນາ ແລະ ສົ່ງເສີມຜະລິດຕະພັນທີ່ເປັນມູນເຊື້ອຂອງບ້ານທ່າແປ້ນຄື ເຊັ່ນ: ການບໍລິການອາຫານແລະເຄື່ອງດື່ມ, ແລະ ການແກະ ສະລັກແລະການຈັກສານ, ການປູກພືດຜັກຕ່າງໆ, ລ້ຽງສັດນ້ອຍ, ໃຫຍ່ ເພື່ອປຸງແຕ່ງເປັນອາຫານຈຳໜ່າຍໃຫ້ນັກທ່ອງທ່ຽວ.	- ສ້າງລາຍຮັບ, ສ້າງວຽກເຮັດງານທຳເຮັດໃຫ້ປະຊາຊົນມີສ່ວນຮ່ວມຫຼາຍ ຂຶ້ນ. -ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ, ການບໍລິການທາງດ້ານສັງຄົມດີຂຶ້ນ ແລະ ປະຊາຊົນມີຄວາມພາກພູມໃຈຕໍ່ຊັບພະຍາກອນທີ່ມີຫຼາຍຂຶ້ນ. -ສາມາດສ້າງກອງທຶນພັດທະນາການ ທ່ອງທ່ຽວຂອງບ້ານໄດ້.
ນັກທ່ອງທ່ຽວ	ໄດ້ນຳໃຊ້ຜະລິດຕະພັນຕ່າງໆ ແລະ ການບໍລິການການທ່ອງທ່ຽວ ແລະ ມີຄວາມຮັບ ຜິດຊອບຕໍ່ສິ່ງແວດລ້ອມ, ເຄົາລົບນັບຖືຮີດຄອງປະເພນີ ແລະ ລະບຽບກົດໝາຍ.	-ໄດ້ນຳໃຊ້ການບໍລິການການທ່ອງທ່ຽວ ຕອບສະໜອງຕາມຈຸດປະສົງຂອງນັກທ່ອງທ່ຽວ - ໄດ້ຄວາມຮູ້ ແລະ ປະສົບການໃນການທ່ອງທ່ຽວ ແລະ ເພີ່ມຄວາມຮັບ ຜິດຊອບໃຫ້ນັກທ່ອງທ່ຽວຕໍ່ສິ່ງແວດ ລ້ອມ, ຮູ້ຈັກເຄົານັບທຳນຽມ ແລະ ຮີດຄອງປະເພນີຂອງທ້ອງຖິ່ນ.

6. ໂຄງສ້າງການຄຸ້ມຄອງແຫຼ່ງທ່ອງທ່ຽວ

6.1 ຄະນະກຳມະການຄຸ້ມຄອງແຫຼ່ງທ່ອງທ່ຽວ

ຄະນະກຳມະການຄຸ້ມຄອງແຫຼ່ງທ່ອງທ່ຽວນ້ຳຕົກຕາດກວ້າງຊີ ສະເໜີດັ່ງນີ້ :

1. ທ່ານ ຫົວໜ້າພະແນກ ຖວທ ແຂວງ ເປັນຫົວໜ້າ
2. ທ່ານ ຮອງຫົວໜ້າພະແນກ ຖວທ ແຂວງ ຜູ້ຊີ້ນຳວຽກງານທ່ອງທ່ຽວ ເປັນຮອງ
3. ເຈົ້າເມືອງ ຫຼື ຮອງເຈົ້າເມືອງຫຼວງພະບາງ ເປັນຄະນະ
4. ຫົວໜ້າຫ້ອງການຖະແຫຼງຂ່າວວັດທະນະທຳ ແລະທ່ອງທ່ຽວເມືອງ ເປັນຄະນະ
5. ຮອງຫົວໜ້າຫ້ອງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມເມືອງ ເປັນຄະນະ

6. ຮອງຫົວໜ້າຫ້ອງການໂຍທາທິການແລະຂົນສົ່ງເມືອງ ເປັນຄະນະ
7. ຮອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຄະນະ
8. ຫົວໜ້າ/ຮອງຫ້ອງການແຜນການແລະ ການລົງທຶນເມືອງ ເປັນຄະນະ
9. ຫົວໜ້າ/ຮອງຫ້ອງວ່າການເມືອງ ເປັນຄະນະ
10. ນາຍບ້ານທ່າແປ້ນ ເປັນຄະນະ

ຂໍ້ແນະນຳ: ນຳສະເໜີແຂວງຍອກຂໍ້ຕົກລົງແຕ່ງຕັ້ງຄະນະຄຸ້ມຄອງແຫຼ່ງທ່ອງທ່ຽວ, ກຳນົດພາລະບົດບາດຂອງຄະນະກຳມະການ.

6.2 **ການສ້າງຕັ້ງກຸ່ມບໍລິການ**

ເພື່ອເຮັດໃຫ້ການບໍລິການເປັນລະບົບ ແລະ ມີການັຈດັຕ້ງຄຸ້ມຄອງ ີ່ຈ່ງສະເໜີັຈດັຕ້ງບາງກຸ່ມ ທີ່ເຫັນວ່າມີຄວາມເໝາະສົມ ຄື:

- ກຸ່ມບໍລິການອາຫານ ແລະ ເຄື່ອງດື່ມ
- ກຸ່ມພະນັກງານນຳທ່ຽວອ້ມບ້ານ, ຮັກສາຄວາມປອດໄພ ແລະ ປະຖົມພະຍາບານ.
- ກຸ່ມສິລະປະການສະແດງວັນນະຄະດີ.

7. ກົນໄກການສ້າງກອງທຶນພັດທະນາແຫລ່ງທ່ອງທ່ຽວ

ອີງຕາມກົດໝາຍວ່າດ້ວຍການທ່ອງທ່ຽວສະບັບປັບປຸງໃນມາດຕາ 75 ໄດ້ລະບຸໄວ້ວ່າກອງທຶນພັດທະນາການທ່ອງທ່ຽວໄດ້ມາຈາກແຫ່ງທ່ອງທ່ຽວ, ເກັບລາຍຮັບຈາກການບໍລິການອື່ນໆເຊັ່ນ: ການເກັບປີ້ເຂົ້າຊົມ, ການຝາກລົດ ແລະ ການເຊົ່າຮ້ານຂາຍອາຫານ-ເຄື່ອງດື່ມຕ່າງໆ. ສະເໜີໃຫ້ມີການປຶກສາຫາສະເພາະຕ່ໍມອີກ.

ດັ່ງນັ້ນ, ຈຶ່ງສ້າງບົດລາຍງານສະບັບນີ້ໄວ້ເປັນບ່ອນອີງໃນການກຳນົດເຂດຈັດສັນ, ປັບປຸງ ແລະ ພັດທະນານ້ຳຕົກຕາດກວາງຊີ ໃຫ້ເປັນສະຖານທີ່ທ່ອງທ່ຽວກະສິກຳທີ່ມີຊື່ສຽງແລະເປັນຈຸດມຸ້ງໝາຍຂອງນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ.

ກົມພັດທະນາການທ່ອງທ່ຽວ
ຄະນະຮັບຜິດຊອບການສຳຫຼວດຈັດສັນແຫຼ່ງທ່ອງທ່ຽວ